

ຈອຍສ໌ ໄມເອີຣ໌

# ບອກເຂົາວ່າ ເຮົາຮັກເຂົາ

ຮັບການສຳແດງເຖິງເລື່ອງຄວາມຮັກ
ຂອງພຣະເຈົ້າທີ່ມີຕໍ່ທ່ານ

# ບອກເຂົາວ່າເຮົາຮັກເຂົາ

ໂດຍ ຈອຍຊ໌ ໄມເອີຣ໌

JOYCE MEYER
MINISTRIES®

# ບອກເຂົາວ່າເຮົາຮັກເຂົາ

Tell Them I Love Them

ຜູ້ຂຽນ ຈອຍຊ໌ ໄມເອີຣ໌

ບິນນາທິການ ສຸລະພິງ ປຣະທຸມວັນ

ພິມຄັ້ງທີ 1 ເດືອນກຸມພາ ປີ 2016

ພິມທີ ເກວລິພຣິນຕິ້ງ ໂທຣ 053-306508

ສະໜັບສະໜຸນການຈັດພິມແລະຈັດຈຳໜ່າຍໂດຍ

ລາຍການຊີວິດປ່ຽນສຸກທຸກວັນ

ຕູ້ ປ.ນ. 272 ອ.ເມືອງ ຈ.ຊຽງຣາຍ 57000

ໂທຣລະສັບ : 053-703881, 084-9902519

ໂທຣສານ : 053-70882

ອີເມວ : jmmthailand@gmail.com

# ສາລະບານ


| | |
|---|---|
| ບົດນຳ | 5 |
| 1 ພຣະເຈົ້າຊົງຮັກທ່ານ! | 7 |
| 2 ຂ້າພະເຈົ້າດີພໍຫຼືບໍ່? | 15 |
| 3 ຄວາມຮັກຄືຄວາມສຳພັນ | 27 |
| 4 ຄວາມຮັກ ຄວາມໄວ້ວາງໃຈ ແລະຄວາມເຊື່ອ | 35 |
| 5 ຫຼຸດພົ້ນຈາກຄວາມຢ້ານ | 45 |
| 6 ຄວາມຮັກຄືການໃຫ້ | 53 |
| 7 ຄວາມຮັກຂອງພຣະເຈົ້າຈະປ່ຽນແປງຊີວິດທ່ານ | 63 |

# ບົດນຳ

ຂ້າພະເຈົ້າເຊື່ອວ່າ ສິ່ງທີ່ຄົນເຮົາຕ້ອງການຫຼາຍທີ່ສຸດຍິ່ງກວ່າສິ່ງອື່ນໃດທັງສິ້ນ ຄືການໄດ້ຮັບການສຳແດງ ໃຫ້ຮູ້ຈັກກັບຄວາມຮັກທີ່ພຣະເຈົ້າມີຕໍ່ເຂົາເປັນສ່ວນຕົວ ຂ້າພະເຈົ້າເຊື່ອວ່າການທີ່ເຮົາຈະດຳເນີນຊີວິດຄຣິສຕຽນທີ່ໄຊຊະນະໄດ້ນັ້ນ ເຮົາຕ້ອງດຳເນີນຊີວິດຢູ່ເທິງຮາກຖານນີ້ເທົ່ານັ້ນ ເຮົາຕ້ອງການຄວາມຮູ້ທາງສະໝອງເລື່ອງຄວາມຮັກຂອງພຣະເຈົ້າ ແຕ່ເຮົາຕ້ອງການ ການສຳແດງ ຊຶ່ງຈະເກີດຂຶ້ນໄດ້ໂດຍອົງພຣະວິນຍານບໍລິສຸດ ແລະໂດຍການທີ່ເຮົາເປັນຜູ້ເຊື່ອໄດ້ໃຊ້ເວລາຄຳຄວນເຖິງຄວາມຮັກຂອງພຣະເຈົ້າແລະສັງເກດເບິ່ງຄວາມຮັກຂອງພຣະເຈົ້າໃນຊີວິດຂອງຕົນເຝົ້າສະແຫວງຫາການສຳແດງທາງພະ ວັດຈະນະຂອງພຣະເຈົ້າທີ່ຂຽນໄວ້ແລ້ວນັ້ນ ແລະໂດຍການອະທິຖານ

ເປັນການງ່າຍ ທີ່ຈະຍອມຮັບວ່າ ພຣະເຈົ້າຊົງຮັກໂລກນີ້ຫຼາຍ ຈົນໄດ້ປະທານອົງພຣະເຢຊູໃຫ້ສິ້ນພຣະຊົນເພື່ອໂລກ ແຕ່ທີ່ຍາກກວ່ານັ້ນກໍຄື ການທີ່ເຊື່ອວ່າ ແມ່ນທ່ານຈະ

ເປັນພຽງຄົນດຽວທີ່ຢູ່ເທິງໂລກນີ້ ພຣະເຈົ້າກໍຍັງຊົງຮັກທ່ານຫຼາຍຈົນຍອມປະທານອົງພຣະເຢຊູໃຫ້ມາສິ້ນພະຊົນເພື່ອທ່ານພຽງຄົນດຽວເທົ່ານັ້ນ

ຫຼັງຈາກທີ່ຂ້າພະເຈົ້າເປັນຄຣິສຕຽນທີ່ມີຊີວິດທໍ້ຖອຍມາຫຼາຍປີ ຂ້າພະເຈົ້າເລີ່ມເຂົ້າໃຈເຖິງຄວາມຮັກຂອງພຣະເຈົ້າ ພຣະອົງໄດ້ຊົງກະລຸນາສຳແດງໃຫ້ຂ້າພະເຈົ້າຮູ້ຜ່ານອົງພຣະວິນຍານບໍລິສຸດວ່າ ພຣະອົງຊົງຮັກຂ້າພະເຈົ້າເປັນການສ່ວນຕົວ ການສຳແດງໃນເລື່ອງນີ້ພຽງເລື່ອງດຽວໄດ້ປ່ຽນແປງຊີວິດຂອງຂ້າພະເຈົ້າໃນທຸກດ້ານໄປຢ່າງໝົດສິ້ນ

ຂ້າພະເຈົ້າເຊື່ອວ່າສິ່ງທີ່ທ່ານຈະໄດ້ອ່ານໃນໜັງສືເຫຼັ້ມນີ້ຈະຊ່ວຍໃຫ້ທ່ານເກີດມູມມອງໃໝ່ແລະແລະເຂົ້າໃຈເຖິງຄວາມຮັກຂອງພະເຈົ້າ ຂ້າພະເຈົ້າເຊື່ອວ່າມັນຈະເຮັດໃຫ້ທ່ານເກີດຄວາມຫິວກະຫາຍອັນສົດໃໝ່ ທີ່ຈະໄດ້ພົບກັບການສຳແດງໃນເລື່ອງນີ້ເປັນສ່ວນຕົວ ຂໍໜຸນໃຈໃຫ້ທ່ານຄ່ອຍໆອ່ານໜັງສືເຫຼັ້ມນີ້ ໃຊ້ເປັນສິ່ງເສີມໃນການສຶກສາພຣະຄຳພີ ແລະໃຊ້ເວລາໃນການອ້ອນວອນພະອະນຸຍາເບິ່ງຂໍ້ພຣະຄຳພີ ແລະຂໍ້ຄິດຕ່າງໆທີ່ປະກົດຢູ່ໃນໜັງສືເຫຼັ້ມນີ້

ໜັງສືເຫຼັ້ມນີ້ມອບໄວ້ໃນມືຂອງທ່ານດ້ວຍຄວາມຖ່ອມໃຈ ໂດຍຄຳນຶງດີວ່າຖ້າປາດສະຈາກພະອົງ ຂ້າພະເຈົ້າກໍບໍ່ມີຄວາມສາມາດຫຍັງເລີຍ ການສຳແດງແລະຄວາມເຂົ້າໃຈພຣະວັດຈະນະໃນເລື່ອງໃດໆ ຈະເປັນໄປໄດ້ໂດຍພຣະຄຸນຂອງພຣະອົງເທົ່ານັ້ນ

# 1

# ພຣະເຈົ້າຊົງຮັກທ່ານ

"ເພາະວ່າພຣະເຈົ້າຊົງຮັກໂລກຈົນໄດ້ຊົງປະທານພຣະບຸດອົງດຽວຂອງພຣະອົງເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນ ຈະບໍ່ຈິບຫາຍແຕ່ຈະມີຊີວິດອັນຕະຫຼອດໄປເປັນນິດ"

ໂຢຮັນ 3:16

ພຣະເຈົ້າຊົງປະສົງທີ່ຈະມີຄອບຄົວ ພຣະອົງຈຶ່ງຊົງສ້າງເຮົາໃຫ້ເປັນລູກຂອງພຣະອົງ ພຣະອົງບໍ່ໄດ້ປະສົງໃຫ້ເຮົາທຳຕົວໃຫ້ເປັນເໝືອນເດັກນ້ອຍເກີດໃໝ່ ແຕ່ໃຫ້ສົມກັບເປັນລູກຂອງພຣະອົງ ພຣະອົງຊົງປະສົງທີ່ຈະໃຫ້ເຮົາເພິ່ງພາແລະພັກພິງພຣະອົງ ປະສົງໃຫ້ເຮົາຮັກພຣະອົງແລະຍອມຮັບຄວາມຈິງຈາກພຣະອົງດ້ວຍຊົງປະສົງໃຫ້ທ່ານວາງໃຈໃນພຣະອົງ ແລະຮ້ອງຮຽກຫາພຣະອົງເມື່ອມີຄວາມຕ້ອງການສິ່ງໃດ ພຣະອົງປະສົງທີຈະມີຄວາມສຳພັນກັບທ່ານເປັນການສ່ວນຕົວ

ພວກເຮົາສ່ວນໃຫຍ່ຍຶດຖືຄວາມໝາຍຂອງໂຢຮັນ 3:16 ໃນລັກສະນະທີ່ກວ້າງເກີນໄປ ເຮົາມັກຈະເວົ້າວ່າ "ອໍ ແມ່ນແລ້ວ ພຣະເຢຊູຊົງສິ້ນພຣະຊົນເພື່ອໂລກ" ແຕ່ພຣະເຢຊູບໍ່ໄດ້ສິ້ນພຣະຊົນເພື່ອພວກເຮົາແບບລວມໆເທົ່ານັ້ນ ພຣະອົງຊົງສິ້ນພຣະຊົນເພື່ອເຮົາແຕ່ລະຄົນເປັນການສ່ວນຕົວດ້ວຍ ພຣະອົງຊົງສິ້ນພຣະຊົນເພື່ອທ່ານ!

ຖ້າໃນໂລກນີ້ມີທ່ານຢູ່ພຽງຄົນດຽວ ພຣະອົງກໍຈະຊົງສິ້ນພຣະຊົນເພື່ອທ່ານເຊັ່ນກັນ ພຣະອົງຈະຊົງຍອມຮັບຄວາມທົນທຸກທໍລະມານທຸກຢ່າງເພື່ອທ່ານ!ພຣະເຈົ້າຊົງຮັກທ່ານຫຼາຍ ພຣະອົງຊົງຮັກທ່ານດ້ວຍຄວາມຮັກອັນຕະຫຼອດໄປເປັນນິດ

ວັນໜຶ່ງ ຂະນະທີ່ຂ້າພະເຈົ້າຂັບລົດຢູ່ໃນຖະໜົນ ພຣະເຈົ້າກ່າວກັບຂ້າພະເຈົ້າໃນໃຈວ່າ "ຈອຍຊ໌ ເຈົ້າເປັນແກ້ວຕາຂອງເຮົາ" ຂ້າພະເຈົ້າບໍ່ຮູ້ອີກຊໍ້າ ວ່າມີຂໍ້ພຣະຄໍາພີຕອນນີ້ຢູ່ ທັນທີຫຼັງຈາກນັ້ນ ມານກໍໃສ່ຄວາມຄິດເຂົ້າມາວ່າ "ໂອຍ ມັນບໍ່ຍິ່ງຈອງຫອງເກີນໄປຫວາ? ເຈົ້າຄິດວ່າຕົວເອງເປັນໃຜ?" ຂ້າພະເຈົ້າຈຶ່ງເລີ່ມເວົ້າກັບຕົວເອງວ່າ "ໂອ ຂ້າພະເຈົ້າບໍ່ຄວນຈະຄິດແບບນັ້ນເລີຍ" ການທີ່ເຮົາຈະຕຶກຕອງວ່າຕົນເອງເປັນຄົນພິເສດມີຄວາມສາມາດແລະມີລັກສະນະເດັ່ນ ສະເພາະຕົວນັ້ນ ມັນເປັນສິ່ງທີ່ຄວາມຄິດຝ່າຍເນື້ອໜັງຂອງເຮົາຍອມຮັບບໍ່ໄດ້ ແຕ່ເຮົາທັງຫຼາຍແຕ່ລະຄົນ ເປັນຜູ້ທີ່ພະບິດາຂອງເຮົາຊົງນິລະມິດສ້າງຂຶ້ນເປັນ

ສ່ວນຕົວ ໃຫ້ມີຄວາມແຕກຕ່າງຈາກຄົນອື່ນໆທີ່ຢູ່ອ້ອມຮອບຂ້າງເຮົາ

ເມື່ອຂ້າພະເຈົ້າຄິດເຖິງເລື່ອງນີ້ ພຣະເຈົ້າໄດ້ຊົງສຳແດງໃຫ້ຂ້າພະເຈົ້າເຫັນພາບຂອງຜູ້ຍິງຄົນໜຶ່ງທີ່ກຳລັງຢືນຢູ່ທາງຂ້າງ ແອັບເປີ້ນກອງໃຫຍ່ໃນຊຸບເປີ້ມາເກັດແຫ່ງໜຶ່ງລາວຫຼຽວເບິ່ງແອັບເປີ້ນຈົນທົ່ວແລ້ວກໍເຫັນໜ່ວຍໜຶ່ງທີ່ງາມກວ່າໜ່ວຍອື່ນໆທັງໝົດ ຈຶ່ງເດມືຈັບໜ່ວຍນັ້ນ ສິ່ງທີ່ພຣະເຈົ້າກ່າວກໍຄືວ່າ ຂ້າພະເຈົ້າເປັນໝາກແອັບເປີ້ນໜ່ວຍທີ່ດີທີ່ສຸດສຳລັບພຣະອົງ ຂ້າພະເຈົ້າເປັນຄົນພິເສດ ຟັງແລ້ວເບິ່ງຄືສິບໍ່ຄ່ອຍຖືກ ແຕ່ເຫັນບໍ່ ພຣະເຈົ້າກ່າວວ່າເຮົາທຸກຄົນເປັນແນວນັ້ນ ບໍ່ໄດ້ໝາຍຄວາມວ່າພຣະເຈົ້າບອກວ່າທ່ານເປັນຄົນງົດງາມ ພຽບພ້ອມ ສ່ວນຄົນອື່ນໆບໍ່ມີຫຍັງດີ ແຕ່ພຣະອົງກ່າວວ່າເຮົາໝົດທຸກຄົນເປັນຄົນພິເສດຊຶ່ງເລື່ອງນີຂຽນໄວ້ໃນພຣະຄຳພີ ແລະພຣະຄຳພີກໍມີໄວ້ເພື່ອເຮົາທຸກຄົນທ່ານຄືແກ້ວພຣະເນດຂອງພຣະເຈົ້າ

ຂ້າພະເຈົ້າບໍ່ໄດ້ຮັບສິ່ງທີ່ພຣະເຈົ້າກ່າວໃນວັນນັ້ນ ເພາະຂ້າພະເຈົ້າຮູ້ສຶກຜິດທີ່ຄິດໃນສິ່ງດີໆກ່ຽວກັບຕົວເອງ ອີກສອງວັນຕໍ່ມາ ຂ້າພະເຈົ້າເປີດພຣະຄຳພີແລະພົບພຣະທຳ ເພງສັນລະເສີນ 17:8 ແລະມີຂໍ້ຄວາມທີ່ປະກົດຕໍ່ໜ້າຕໍ່ຕາຂ້າພະເຈົ້າຢ່າງຈະແຈ້ງວ່າ “ຂໍຊົງໂຜດຮັກສາຂ້ານ້ອຍໄວ້ດັ່ງແກ້ວຕາ ຂໍຊົງໂຜດປົກບັງຂ້ານ້ອຍໄວ້ໃຕ້ຮົ່ມປີກຂອງພຣະອົງ” ຂ້າພະເຈົ້າຈຶ່ງເວົ້າກັບຕົວເອງວ່າ “ໂອຍ ຕາຍແລ້ວ

ວັນນັ້ນເປັນສຽງຂອງພຣະເຈົ້າ ກ່າວແທ້ໆ ຂ້າພະເຈົ້າເປັນແກ້ວຕາຂອງພຣະເຈົ້າ" ເມື່ອຂ້າພະເຈົ້າຄຶດເຖິງຂໍ້ນີ້ຍາມໃດ ຂ້າພະເຈົ້າຮູ້ສຶກວ່າຕົວເອງເປັນຄົນພິເສດຂອງພຣະເຈົ້າແທ້ໆ

ຄົນເຮົາມີຄວາມຢາກຄວາມຕ້ອງການ ແລະຄວາມປາດຖະໜາໃນໃຈທີ່ຈະເປັນທີ່ຮັກຂອງຄົນອື່ນ ພຣະເຈົ້າຊົງສ້າງເຮົາຂຶ້ນມາຢ່າງນັ້ນ ຫຼາຍຄົນເຊື່ອວ່າພຣະເຈົ້າຊົງຮັກໂລກຊົງຮັກພະເຢຊູ ແຕ່ຮູ້ສຶກວ່າຍາກເຫຼືອເກີນທີ່ຈະເຊື່ອວ່າພຣະເຈົ້າຊົງຮັກພວກເຂົາ ແຕ່ພະຄຳສອນໄວ້ວ່າ ພຣະເຈົ້າຊົງຮັກພວກເຂົາຫຼາຍເທົ່າໆກັບທີ່ພຣະອົງຊົງຮັກພຣະເຢຊູດ້ວຍຂໍໃຫ້ເຮົາເບິ່ງໃນພຣະທຳໂຢຮັນ 5:20

"ດ້ວຍວ່າ ພຣະບິດາຮັກພຣະບຸດແລະສຳແດງໃຫ້ພຣະບຸດເຫັນທຸກສິ່ງ ທີ່ພຣະອົງເອງກະທຳຢູ່ ພຣະອົງຈະສຳແດງໃຫ້ພຣະບຸດເຮັດສິ່ງຍິ່ງໃຫຍ່ກວ່ານັ້ນອີກ ຊຶ່ງພວກເຈົ້າຈະອັດສະຈັນໃຈໃນສິ່ງເຫຼົ່ານັ້ນ"

ພຣະເຈົ້າກ່າວໃນພຣະທຳຕອນນີ້ວ່າ "ເຮົາກະທຳການໃຫຍ່ເຫຼົ່ານີ້ໂດຍທາງພຣະເຢຊູ ແລະຈະທຳການຍິ່ງໃຫຍ່ກວ່ານີ້ອີກຜ່ານທາງພຣະເຢຊູ ຊຶ່ງເຈົ້າທັງຫຼາຍຈະຮູ້ສຶກອັດສະຈັນໃຈ" (ຜູ້ຂຽນຂະຫຍາຍຄວາມເອງ) ທ່ານຮູ້ບໍວ່າມັນເປັນການດີທີ່ເຮົາຈະຮູ້ສຶກປະຫຼາດໃຈໃນບາງສິ່ງບາງຢ່າງຄືຮູ້ສຶກອັດສະຈັນໃນສິ່ງທີ່ພຣະເຈົ້າຊົງກຳລັງກະທຳ?

ເຮົາໄດ້ອ່ານຂໍ້ພຣະຄຳພີຕອນນີ້ແລ້ວ ແຕ່ຫຼາຍເທື່ອເຮົາເບິ່ງຂ້າມສິ່ງທີ່ພຣະເຈົ້າປະສົງຈະກະທຳເພື່ອເຮົາໄປ ພຣະອົງປະສົງໃຫ້ເຮົາຫຼຽວເບິ່ງການໃຫຍ່ ຊຶ່ງພຣະອົງໄດ້ຊົງກະທຳແລ້ວຜ່ານທາງພຣະເຢຊູ ແລ້ວໃຫ້ເຮົາຮູ້ສຶກປະຫຼາດໃຈຈົນຕ້ອງອຸທານວ່າ "ໂອ ພຣະເຈົ້າຂ້າ ສິ່ງທີ່ພຣະອົງກະທຳຜ່ານທາງພຣະເຢຊູນັ້ນ ອັດສະຈັນແທ້ໆ" ຈາກນັ້ນພຣະອົງຕ້ອງການໃຫ້ທ່ານເປີດເບິ່ງພຣະຄຳພີໃນພຣະທຳໂຢຮັນ 14:12 ເຊິ່ງພຣະເຢຊູກ່າວວ່າ "ເຮົາບອກຄວາມຈິງແກ່ທ່ານທັງຫຼາຍວ່າ ຜູ້ທີ່ວາງໃຈໃນເຮົາຈະເຮັດກິດຈະການທີ່ເຮົາເຮັດຢູ່ນັ້ນເໝືອນກັນ ແລະຜູ້ນັ້ນຈະເຮັດກິດຈະການໃຫຍ່ກວ່ານັ້ນອີກເພາະວ່າຝ່າຍເຮົາໄປເຖິງພຣະບິດາຂອງເຈົ້າ"

ພຣະເຈົ້າກະທຳຢ່າງດຽວກັນຜ່ານທາງຕົວທ່ານດ້ວຍ ແລະທ່ານຈະກະທສິ່ງຍິ່ງໃຫຍ່ກວ່ານັ້ນອີກ ເພາະພຣະເຢຊູສະເດັດໄປເຖິງພຣະບິດາຂອງພຣະອົງແລ້ວ ທ່ານເຊື່ອແບບນີ້ບໍ່? ທ່ານເຊື່ອແທ້ໆຫຼືບໍ່ວ່າພຣະເຈົ້າຮັກທ່ານ ແລະພຣະອົງຈະຊົງໃຊ້ຊີວິດທ່ານ?

ວັນໜຶ່ງ ຂະນະທີ່ຂ້າພະເຈົ້າກຳລັງສຶກສາພຣະຄຳພີຢູ່ ພຣະຜູ້ເປັນເຈົ້າກ່າວກັບຂ້າພະເຈົ້າວ່າ "ຈອຍຊ ໃນແຕ່ລະວັນເຮົາທຳການຫຼາຍສິ່ງຫຼາຍຢ່າງເພື່ອຄົນທັງຫຼາຍເພາະເຮົາຮັກເຂົາ ແຕ່ພວກເຂົາກໍຍັງເບິ່ງບໍ່ເຫັນອີກ ເຂົາບໍ່ຮູ້ອີກຊ້ຳ

ວ່າເຮົາທຳ ເຮົາຈະຍົກຕົວຢ່າງໃຫ້ເຈົ້າເຫັນເລື່ອງໜຶ່ງ ທຸກວັນເມື່ອເຮົາສັ່ງດວງອາທິດວ່າ "ຈົ່ງຂຶ້ນ" ເຮົາເຮັດແນວນັ້ນກໍເພື່ອຈອຍຊ ເພື່ອແບັດຕີ ເພື່ອ ເຈມມີ ແລະເພື່ອ (ຕື່ມຊື່ຂອງທ່ານລົງໄປ)"

ລອງຢຸດຄິດໃນເລື່ອງນີ້ເບິ່ງດູ ດວງອາທິດຂຶ້ນມາໃນທ້ອງຟ້າທຸກໆວັນກໍເພື່ອທ່ານ ແມ່ນແລ້ວ ດວງອາທິດເດ! ແຕ່ເຮົາກັບຄິດວ່າຍັງແນວໃດດວງອາທິດກໍຕ້ອງຂຶ້ນມາຢູ່ແລ້ວ ເຮົາຮູ້ວ່າດວງອາທິດຕ້ອງຂຶ້ນທຸກວັນແຕ່ມັນຂຶ້ນມາເພື່ອທ່ານ ຝົນຕົກເພື່ອທ່ານ ເມື່ອຫິມະຕົກມັນກໍຕົກເພື່ອທ່ານ ພຣະເຈົ້າຮັກທ່ານຫຼາຍຂະໜາດນັ້ນແຫລະ

ພຣະບັນຍັດສອງ 7:9 ກ່າວວ່າ "ຈົ່ງຈົດຈຳໄວ້ວ່າອົງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພວກເຈົ້າແມ່ນພຣະເຈົ້າແຕ່ອົງດຽວ ແລະພຣະອົງຊົງສັດຊື່ ພຣະອົງຮັກສາພັນທະສັນຍາຂອງພຣະອົງ ແລະສຳແດງຄວາມຮັກອັນໝັ້ນຄົງເຖິງພັນຊົ່ວອາຍຸຄົນ"

ທ່ານຄິດວ່າໜຶ່ງພັນຊົ່ວເຊັ່ນຄົນ ດົນພໍບໍທີ່ຈະເຮັດໃຫ້ທ່ານຊາບຊຶ້ງໃນຄວາມຮັກຂອງພຣະເຈົ້າ? ພຣະເຈົ້າຊົງດຳລົງຢູ່ເປັນນິດ ເຮົາບໍ່ມີວັນທີ່ຈະເຮັດໃຫ້ພະອົງເມື່ອຍອ່ອນໄດ້ ຫຼາຍຄົນຄິດວ່າເຮົາສາມາດເຮັດໃຫ້ພຣະເຈົ້າສິ້ນຫວັງໄດ້ໂດຍຄວາມຫຼົ້ມເຫລວແລະຫຍຸ້ງເຫຍິງຂອງເຮົາ ແຕ່ບໍ່ມີທາງດອກຄວາມຮັກບໍ່ມີວັນສູນສິ້ນ ແລະເຮົາເຮັດໃຫ້ພຣະເຈົ້າ

ໝົດຮັກເຮົາບໍ່ໄດ້ ຄວາມຮັກບໍ່ແມ່ນອີຫຍັງຈັກຢ່າງໜຶ່ງທີ່ພຣະເຈົ້າຊົງກະທຳ ແຕ່ມັນຄືສິ່ງທີ່ພະເຈົ້າຊົງເປັນ

ແມ່ນແຕ່ຄົນບາບທີ່ສົກກະປົກແຫຼກເລະທີ່ສຸດເທົ່າທີ່ເຄີຍມີຢູ່ໃນໂລກນີ້ ຊຶ່ງຖົ່ມນໍ້າລາຍຫົດໜ້າພຣະເຢຊູ ແລະເວົ້າວ່າ "ກູບໍ່ຕ້ອງການກ່ຽວຂ້ອງກັບມຶງ ກູເຕັມໃຈຢ່າງຍິ່ງທີ່ຈະໄປນາລົກ" ພຣະເຈົ້າກໍຍັງຄົງຮັກເຂົາ ຖ້າເປັນ ແນວນັ້ນແລ້ວພຣະອົງຈະບໍ່ຮັກບັນດາຄົນທີ່ພຣະອົງໄດ້ຊົງເລືອກສັນ ແລະຊໍາລະໄວ້ເພື່ອພຣະອົງໂດຍສະເພາະໄດ້ແນວໃດ?

ບາງຄົນອາດຈະເວົ້າວ່າ " ຂ້ອຍໄດ້ຮັບພຣະເຢຊູເຂົ້າສູ່ໃຈແລ້ວ ແລະຂ້ອຍຮັກພຣະອົງ" ແຕ່ຂ້າພະເຈົ້າຂໍຖາມທ່ານວ່າ ທ່ານເຊື່ອວ່າພຣະເຈົ້າຮັກທ່ານຫຼາຍປານໃດ?

ນີ້ຄືຂ່າວສານທີ່ລຽບງ່າຍຢ່າງຍິ່ງເພື່ອທ່ານ ພຣະເຈົ້າຮັກທ່ານ ແຕ່ມັນເປັນຮາກຖານເບື້ອງຕົ້ນທີ່ພຣະເຈົ້າຕ້ອງວາງໄວ້ໃນຊີວິດທ່ານ ເພື່ອທ່ານຈະສາມາດເຂົ້າໃຈເຖິງເລື່ອງອື່ນໆໄດ້

ບໍ່ວ່າທ່ານຈະຮຽນຮູ້ເລື່ອງອື່ນໃດ ຫຼືສຶກສາແລະສະແຫວງຫາເລື່ອງຂອງພຣະເຈົ້າຫຼວງຫຼາຍປານໃດ ແຕ່ຖ້າທ່ານບໍ່ສາມາດຍອມຮັບຄວາມຈິງທີ່ວ່າພຣະເຈົ້າຊົງຮັກທ່ານໄດ້ ທ່ານກໍຈະກ້າວໄປບໍ່ຮອດໃສ ຄວາມຮັກທີ່ພຣະເຈົ້າມີຕໍ່ທ່ານນັ້ນເປັນຮາກຖານຂອງຄວາມເຊື່ອຂອງຄວາມເຊື່ອ

ໃນການມີເສລີພາບຈາກບາບ ແລະໃນການທີ່ເຮົາຈະສາມາດກ້າວອອກໄປຮັບໃຊ້ຜູ້ອື່ນໂດຍປາດສະຈາກຄວາມຢ້ານ ທ່ານຮັບຄວາມຮັກທີ່ພຣະເຈົ້າມີຕໍ່ທ່ານໄດ້ບໍ່?

ພຣະເຈົ້າຊົງຮັກທ່ານ!

# 2

## ຂ້າພະເຈົ້າດີພໍຫລືບໍ່ ?

ແລະຄວາມຫວັງໃຈບໍ່ໄດ້ເຮັດໃຫ້ເກີດຄວາມເສຍໃຈ ເພາະຜິດຫວັງ ເພາະເຫດວ່າຄວາມຮັກຂອງພຣະເຈົ້າໄດ້ໄຫລເຂົ້າສູ່ຈິດໃຈຂອງເຮົາໂດຍທາງພະວິນຍານບໍລິສຸດ ຊຶ່ງພຣະອົງໄດ້ປະທານໃຫ້ແກ່ເຮົາແລ້ວ

ຂະນະເມື່ອເຮົາຍັງຂາດກຳລັງ ພຣະຄຣິສກໍໄດ້ຊົງສິ້ນພຣະຊົນເພື່ອຊ່ອຍຄົນບາບໃນເວລາທີ່ເໝາະສົມ

ບໍ່ມີໃຜທີ່ຈະຢາກຕາຍເພື່ອຄົນຊົ່ວ ແຕ່ບາງເທື່ອຈະມີຄົນອາດຈະຕາຍເພື່ອຄົນດີກໍໄດ້

ແຕ່ພຣະເຈົ້າຊົງສຳແດງຄວາມຮັກຂອງພຣະອົງແກ່ເຮົາທັງຫລາຍ ຄືຂະນະທີ່ເຮົາຍັງເປັນຄົນບາບຢູ່ນັ້ນ ພຣະຄຣິສໄດ້ຊົງສິ້ນພຣະຊົນເພື່ອເຮົາ

ເພາະເຫດນັ້ນເມື່ອເຮົາເປັນຄົນຊອບທຳແລ້ວໂດຍພຣະໂລຫິດຂອງພຣະອົງ ຍິ່ງກວ່ານັ້ນເຮົາຈະພົ້ນຈາກພະອາດຊະຍາຂອງພຣະເຈົ້າໂດຍພຣະອົງ

ເພາະວ່າຖ້າຂະນະທີ່ເຮົາຍັງເປັນສັດຕູຕໍ່ພຣະເຈົ້າ ເຮົາໄດ້ກັບຄືນດີກັບພຣະອົງໂດຍທີ່ພຣະບຸດຂອງພຣະອົງສິ້ນພຣະຊົນຍິ່ງກວ່ານັ້ນອີກເມື່ອເຮົາກັບຄືນດີແລ້ວເຮົາກໍຈະພົ້ນໂດຍພຣະຊົນຊີບຂອງພຣະອົງແທ້

ໂລມ 5:5-10

ຄຣິສຕຽນຫຼາຍຄົນເຊື່ອວ່າພຣະເຈົ້າຮັກເຂົາ ຈົນກວ່າເຂົາສິບໍ່ເຮັດຫຍັງຜິດພາດຫຼົ້ມເຫຼວ ຄົນສ່ວນໃຫຍ່ບໍ່ຄ່ອຍມັກຕົວເອງປານໃດ ດັ່ງນັ້ນເຂົາຈຶ່ງສະຫຼຸບວ່າພຣະເຈົ້າກໍຄົງບໍ່ປະທັບໃຈໃນຕົວເຂົາພໍປານໃດ ແຕ່ພຣະຄຳພີພັດກ່າວໄວ້ວ່າ "ມະນຸດສຳຄັນຫຍັງແດ່ທີ່ພຣະອົງຕ້ອງຄິດເຖິງພວກເຂົາມະນຸດທີ່ຕາຍເປັນສຳຄັນຫຍັງທີ່ພຣະອົງຕ້ອງຫວ່ງໃຍພວກເຂົາ" (ເພງສັນລະເສີນ8:4) ພວກເຮົາເປັນພຽງແຕ່ສິ່ງທີ່ພຣະເຈົ້າຊົງສ້າງຂຶ້ນມາເທົ່ານັ້ນ ແລະພຣະອົງຊົງຮັກເຮົາກໍເພາະພຣະອົງຊົງຮັກເຮົາ ພຣະອົງຊົງເປັນຄວາມຮັກ (1ໂຢຮັນ4:16)

ພຣະອົງຊົງຮັກທ່ານແລະທ່ານກໍເປັນຄົນພິເສດນັ້ນແຫລະໝາຍຄວາມວ່າທ່ານມີເອກະລັກພິເສດແລະບໍ່ຄືໃຜ ພຣະເຈົ້າບໍ່ໄດ້ກຳນົດໃຫ້ທ່ານເປັນຄືຂ້າພະເຈົ້າ ແລະຂ້າພະເຈົ້າກໍບໍ່ຈຳເປັນຕ້ອງຄືທ່ານ ເຮົາຄືສິທຸກໃຈຫຼາຍຖ້າຕ່າງຄົນຕ່າງພະຍາຍາມເຮັດຕົວເອງໃຫ້ຄືຄົນອື່ນ ຊຶ່ງຈະມີແຕ່ຜົນເສຍ ຄືເປັນການໃຫ້ໂອກາດແກ່ມານທີ່ຈະຕົວະເຮົາວ່າ ເຮົາຍັງບໍ່ດີພໍ ແຕ່ສິ່ງທີ່ສຳຄັນກໍຄື ສຳລັບພຣະເຈົ້ານັ້ນເຮົາບໍ່ຈຳເປັນຕ້ອງເປັນຄົນທີ່ "ດີພໍ"

ພຣະເຢຊູຊົງສິ້ນພຣະຊົນເພື່ອທ່ານ ເພາະວ່າທ່ານເປັນຄົນວິເສດເລີເລີດ ຫຼືເປັນເພາະພຣະອົງຊົງຮັກທ່ານ? ພຣະຄຳພີກ່າວວ່າຖ້າພຣະອົງຊົງຮັກທ່ານຫຼາຍຈົນຍອມຕາຍເພື່ອທ່ານໄດ້ ຖ້າເຊັ່ນນັ້ນເມື່ອເຮົາໄດ້ເປັນຄົນຊອບທຳໂດຍທາງພຣະໂລຫິດຂອງພຣະອົງແລວ ພຣະອົງຈະຊົງຮັກເຮົາຫຼາຍພຽງໃດ? (ໂລມ5:8-9) ພຣະອົງຊົງຮັກທ່ານຫຼາຍຈົນໄດ້ຊົງປົກປິດ

ຄວາມຜິດພາດເລັກໆນ້ອຍໆ ທີ່ທ່ານເຮັດລົງໄປໃນແຕ່ລະວັນ ພຣະອົງຊົງຮັກທ່ານຫຼາຍພໍທີ່ຈະນຳພາທ່ານຜ່ານພົ້ນວັນນີ້ໄປໄດ້ ດ້ວຍລິດເດດແລະຄວາມມີໄຊ

ວັນໜຶ່ງພຣະເຈົ້າໄດ້ຊົງສຳແດງຕົວຢ່າງໃຫ້ຂ້າພະເຈົ້າເຫັນວ່າພຣະອົງຊົງທອດພະເນດເບິ່ງຄວາມຜິດພາດແລະບົກຜ່ອງຂອງເຮົາແນວໃດແນ່ ລອງຄຶດພາບເດັກນ້ອຍໆ

ຄົນໜຶ່ງອາຍຸປະມານ 3-4 ປີ ຊຶ່ງເຝົ້າເບິ່ງຕອນແມ່ເຮັດວຽກເຮືອນ ເຫດທີ່ນາງນ້ອຍຮັກແມ່ຂອງຕົນຫຼາຍຈຶ່ງໄດ້ເຂົ້າໄປຈັບເອົາກະປ໋ອງໃສ່ນ້ຳໜ່ວຍນ້ອຍ ກັບເສດຜ້ານ້ອຍໆອອກໄປທີ່ຫ້ອງໜ້າຕ່າງບ່ອນລະບຽງໜ້າບ້ານ ເອົາເສດຜ້າເອົາກະດາດທິດຊູ້ມາຖູສະຢ່າງດີ

ແນ່ນອນ ແວ່ນກໍຄືງເຕັມໄປດ້ວຍຝຸ່ນປະສົມນ້ຳເປັນຮ່ອງຮອຍເຕັມໄປດ້ວຍຟອງສະບູເປິເປື້ອນໄປໝົດ ເມື່ອທ່ານເຫັນນາງນ້ອຍຕົວແສບ ເອົາຜ້າຖູເຮືອນຢ່າງດີໄປເຮັດເປື້ອນແນວນັ້ນ ທ່ານກໍຄືງໃຈຮ້າຍຈົນຢາກຈະບີບຄໍລູກ ແຕ່ໜູນ້ອຍກໍແລ່ນເຂົ້າມາຫາທ່ານເວົ້າສຽງ ແຈ້ວໆວ່າ "ແມ່ເອີຍ ລູກເຊັດໜ້າຕ່າງໃຫ້ແມ່ແລ້ວໃດ ລູກເຮັດວຽກຊ່ວຍແມ່ຢ່າງດີເລີຍ ເພາະລູກຮັກແມ່ທີ່ສູດເລີຍ

ແມ່ທີ່ເຕັມໄປດ້ວຍຄວາມຮັກກໍຕ້ອງເວົ້າວ່າ "ໂດຍ.. ໂດຍ..ລູກເຮັດດີຂະໜາດເລີຍ ຂອບໃຈເດີທີ່ລູກຊ່ວຍແມ່" ແລະເມື່ອລູກໄປແລ່ນຫຼິ້ນບ່ອນອື່ນ ລາວກໍຈະຟ້າວຈັດການທຳຄວາມສະອາດຮອຍເປື້ອນນັ້ນໃໝ່ ແລະມື້ໜ້າກໍຫາໂອກາດສອນລູກບໍ່ໃຫ້ເຮັດແນວນັ້ນອີກ

ພຣະເຈົ້າກ່າວກັບຂ້າພະເຈົ້າວ່າ ນັ້ນແລະຄືສິ່ງທີ່ພຣະເຈົ້າຊົງກະທຳແກ່ເຮົາ ພຣະອົງຊົງຄອຍຊ່ວຍລ້າງຊຳລະສິ່ງທີ່ເຮົາເຮັດເປື້ອນໄວ້ສະເໝີ ຖ້າເຮົາເຮັດໃນສິ່ງທີ່ເຮົາຄິດວ່າດີທີ່ສຸດແລ້ວເທົ່າທີ່ເຮົາຮູ້ ພຣະເຈົ້າກໍຄືງຄາດຫວັງໃຫ້ເຮົາເຮັດ

ສໍ່ານັ້ນ ພຣະອົງບໍ່ໄດ້ຄາດຫວັງໃຫ້ທ່ານເຮັດ ສິ່ງໃດທີ່ທ່ານເຮັດບໍ່ໄດ້ ພຣະອົງສາມາດປ່ຽນແປງທ່ານຖ້າທ່ານພ້ອມທີ່ຈະບອກພຣະອົງ "ພຣະອົງເປັນຝ່າຍຖືກ ພຣະອົງເຈົ້າຂ້າ ຂ້າພະອົງຜິດໄປແລ້ວ ຂ້າພະອົງພະຍາຍາມປ່ຽນແປງແຕ່ກໍເຮັດບໍ່ໄດ້" ແລ້ວພຣະອົງກໍຈະຊົງປ່ຽນຊີວິດທ່ານ ເພາະຊົງຮູ້ວ່າທ່ານເຮັດໃຫ້ຕົວເອງດີຂຶ້ນບໍ່ໄດ້ຖ້າປາດສະຈາກຄວາມຊ່ວຍເຫຼືອຂອງພຣະອົງ

"ເພາະພະອົງຜູ້ທີ່ພຣະເຈົ້າຊົງໃຊ້ມານັ້ນ ຊົງກ່າວພະວັດຈະນະຂອງພຣະເຈົ້າ ເພາະພຣະເຈົ້າບໍ່ໄດ້ປະທານພຣະວິນຍານຢ່າງຈໍາກັດ

ພຣະບິດາຊົງຮັກພຣະບຸດ ແລະມອບທຸກສິ່ງໄວ້ໃນພຣະຫັດຂອງພຣະອົງ"

ໂຢຮັນ 3:34-35

ວັນໜຶ່ງ ຂະນະທີ່ຂ້າພະເຈົ້າກໍາລັງສຶກສາພຣະຄໍາພີຢູ່ ຂ້າພະເຈົ້າໄດ້ພິຈາລະນາເຖິງພຣະຄໍາຕອນນີ້ແລະຕ້ອງຮ້ອງອຸທານອອກມາດ້ວຍຄວາມຍິນດີທີ່ເຫັນວ່າພຣະເຈົ້າບໍ່ໄດ້ປະທານພຣະວິນຍານຂອງພຣະອົງໃຫ້ເຮົາຢ່າງຈໍາກັດ ພຣະອົງບໍ່ໄດ້ປະທານອັນນັ້ນໃຫ້ເຮົານິດອັນນີໃຫ້ເຮົານ້ອຍ

ແຕ່ພຣະອົງກ່າວວ່າ "ນີ້ຄືສິ່ງທີ່ເຮົາມີຢູ່ ຈົ່ງຮັບເອົາໄປທັງໝົດເລີຍ" ທຸກສ່ວນສ້ຽວແຫ່ງລິດເດດແລະຄວາມຮັກຂອງພຣະເຈົ້າຕຽມພ້ອມໄວ້ໃຫ້ທ່ານແລ້ວວັນນີ້ ພຣະອົງ

ມີທຸກສິ່ງທີ່ທ່ານຕ້ອງການໃຫ້ທ່ານຮັບເອົາໄວ້ ເປັນຫຍັງ? ກໍເພາະພຣະອົງຮັກທ່ານ ທ່ານບໍ່ຈຳເປັນຕ້ອງດີພ້ອມກ່ອນເພື່ອຈະມີສິດໄດ້ຮັບ ເພາະແນວໃດທ່ານກໍບໍ່ມີທາງດີພໍຈົນສົມຄວນທີ່ຈະຮັບພຣະພອນຈາກພຣະເຈົ້າໄດ້ ທ່ານບໍ່ຈຳເປັນຕ້ອງງາມພໍຫຼືສະຫຼາດພໍຈຶ່ງຈະມີສິດໄດ້ຮັບ ແຕ່ພຣະເຈົ້າປະສົງທີ່ຈະປະທານໃຫ້ທ່ານ ເພາະພຣະອົງຊົງຮັກທ່ານ

ໃນພຣະທຳພະບັນຍັດສອງ 7:6-7 ພຣະເຈົ້າກ່າວວ່າ "ເພາະວ່າພວກທ່ານເປັນຊົນຊາດບໍລິສຸດສຳລັບພະຍາໂຮວາພຣະເຈົ້າຂອງທ່ານ ພຣະຍາໂຮວາພຣະເຈົ້າຂອງທ່ານຊົງເລືອກທ່ານອອກຈາກຊົນຊາດທັງຫຼາຍທີ່ຢູ່ເທິງພື້ນໂລກໃຫ້ມາເປັນຊົນຊາດໃນກຳມະສິດຂອງພຣະອົງ

ທີ່ພຣະເຈົ້າຊົງຮັກແລະຊົງເລືອກທ່ານທັງຫຼາຍນັ້ນບໍ່ແມ່ນເພາະທ່ານທັງຫຼາຍມີຈຳນວນຫຼາຍກວ່າປະຊາຊົນຊາດອື່ນ ດ້ວຍວ່າໃນບັນດາຊົນຊາດທັງຫຼາຍ ທ່ານເປັນຈຳນວນໜ້ອຍທີ່ສຸດ"

ພຣະເຈົ້າຊົງເລືອກສັນຊົນຊາດອິດສະລາເອັນໃຫ້ເປັນປະຊາກອນພິເສດຂອງພຣະອົງ ແລະໃນທຸກວັນນີ້ໃນຖານະທີ່ເຮົາເປັນຄຣິສຕະຈັກ ເຮົາກໍຄືຊົນຊາດອິດສະລາເອັນແທ້ໃນຝ່າຍວິນຍານ ດັ່ງນັ້ນຂໍ້ພຣະຄຳພີຕອນນີ້ຈຶ່ງເປັນຂໍ້ຄວາມທີ່ກ່າວເຖິງທ່ານເຊັ່ນດຽວກັນ ພຣະອົງກ່າວວ່າ "ເຮົາບໍ່ໄດ້ເລືອກເຈົ້າເພາະເຈົ້າເປັນຊົນກຸ່ມໃຫຍ່ທີ່ສຸດ

ໃນໂລກ" ຖ້ານຳມາປະຍຸກເຂົ້າກັບຊີວິດຂອງເຮົາກໍຄື ພຣະອົງກ່າວວ່າ "ເຮົາບໍ່ໄດ້ເລືອກເຈົ້າເພາະເຈົ້າເຮັດທຸກສິ່ງ ຖືກຕ້ອງໝົດ ຫຼືພຣະເຈົ້າເປັນຄົນດີແທ້ໆ"

ພຣະອົງກ່າວຕໍ່ໄປວ່າ ພວກເຂົາເປັນຄົນຈຳນວນໜ້ອຍ ທີ່ສຸດ ຍິ່ງກວ່າຊົນກຸ່ມອື່ນ ທີ່ຈິງຖ້າທ່ານເປັນຄືຂ້າພະເຈົ້າກໍ ຄົງຄິດວ່າກ່ອນທີ່ຈະມາຮັບຄວາມພົ້ນນັ້ນຕົນເອງເປັນຄົນ ທີ່ດ້ອຍກວ່າຄົນອື່ນໆຫລາຍສົມຄວນ ແຕ່ໃນຂໍ້ທີ່ 8 ພຣະເຈົ້າ ຊົງກ່າວວ່າ

"ແຕ່ເພາະພຣະເຈົ້າຊົງຮັກທ່ານທັງຫຼາຍ ແລະ ພຣະອົງຊົງຮັກສາຄຳປະຕິຍານ ຊຶ່ງພຣະອົງຊົງປະຕິຍານໄວ້ ກັບບັນພະບຸລຸດຂອງທ່ານທັງຫຼາຍ ພຣະເຈົ້າຈຶ່ງຊົງພາທ່ານ ທັງຫຼາຍອອກມາດ້ວຍພຣະຫັດອັນຊົງລິດ ແລະຊົງໄຖ່ທ່ານ ທັງຫຼາຍໃຫ້ພົ້ນຈາກແດນທາດຈາກມືຂອງຟາໂລກະສັດອີຢິບ"

ນັ້ນແຫຼະຄືຈຸດທີ່ເຮັດໃຫ້ເຮົາໂຫ່ຮ້ອງໄດ້ພຣະເຈົ້າ ກ່າວວ່າ "ເຮົາໄດ້ຮັກເຈົ້າແລະເອີ້ນເຈົ້າວ່າເປັນຊົນບໍລິສຸດ ເປັນຄົນພິເສດສຳລັບເຮົາ ເຮົາໄດ້ເລືອກເຈົ້າບໍ່ແມ່ນເພາະ ເຈົ້າເປັນຄົນດີພ້ອມ ແຕ່ເພາະວ່າເຮົາຮັກເຈົ້າ" ທ່ານຮູ້ບໍ່ວ່າ ພຣະເຈົ້າຢາກໃຫ້ທ່ານເຮັດຫຍັງໃນມື້ນີ້? ພຣະອົງປະສົງໃຫ້ ທ່ານຍອມຮັບແລະຮັບເອົາຄວາມຮັກຂອງພຣະອົງ

ບັນຫາຂອງພວກເຮົາສ່ວນຫຼາຍນັ້ນຄື ເຮົາບໍ່ມັກ ຕົວເອງ ເຮົາບໍ່ເຊື່ອວ່າພຣະເຈົ້າຊົງຮັກເຮົາ ແລະບໍ່ເຊື່ອວ່າ

ຄົນອື່ນໆຮັກເຮົາ ເຮົາຄິດວ່າ "ເຂົາຈະຮັກເຮົາໄດ້ແນວໃດ ຊີວິດເຮົາມັນຫຍຸ້ງຍາກຂະໜາດນີ້? ຖ້າທ່ານເຊື່ອວ່າຕົວເອງເປີເປື້ອນແລະເປັນຕາຂີ້ດຽດ ທ່ານກໍຈະເລີ່ມຄິດແລະທຳຕົວເປີເປື້ອນແລະເປັນຕາລັງກຽດດ້ວຍ ທ່ານມີຊີວິດຕາມພາບພົດທີ່ມີຕໍ່ຕົນເອງໃນໃຈຂອງທ່ານ

ບັນຫາໃຫຍ່ທີ່ສຸດທີ່ຂ້າພະເຈົ້າເຄີຍມີຄື ຂ້ອຍບໍ່ມັກຕົວເອງ ແລະຂ້ອຍບໍ່ແມ່ນ ຢ່າງໜ້ອຍຮ້ອຍລະ 75 ຂອງເວລາທັງໝົດເພື່ອພະຍາຍາມປ່ຽນຊີວິດຕົວເອງ ຂ້າພະເຈົ້າຄິດວ່າຂ້າພະເຈົ້າເປັນຄົນຄິດຫຼາຍເກີນໄປເລີຍພະຍາຍາມເປັນຄົນງຽບ ແຕ່ເມື່ອເລີ່ມງຽບກໍຮູ້ສຶກວ່າເກັບກົດ ຄົນອື່ນໆກໍສົງໄສວ່າເປັນຫຍັງຂ້າພະເຈົ້າຈຶ່ງເປັນຄົນງຽບໄປ ແລະຂ້າພະເຈົ້າກໍຄິດໃນໃຈວ່າ ກໍພວກທ່ານເອງຫັ້ນແຫລະທີ່ບອກວ່າຂ້າພະເຈົ້າເວົ້າຫຼາຍ ຢ່າມາຫຍຸ້ງກັບຂ້າພະເຈົ້າດີກວ່າ ຂ້າພະເຈົ້າກຳລັງພະຍາຍາມເປັນຄົນເວົ້າໜ້ອຍຢູ່

ຂ້າພະເຈົ້າບອກບໍ່ໄດ້ວ່າຂ້າພະເຈົ້າຕົກຢູ່ໃນສະພາບນັ້ນ ເປັນເວລາຈັກປີ ກໍຍັງມີບັນຫາເພາະປາກຂອງຂ້າພະເຈົ້າເອງ ຫຼາຍຄົນທີ່ມັກເວົ້າຫຼາຍ ມັກຈະໄດ້ແຕ່ງງານກັບຄົນທີ່ເວົ້າໜ້ອຍ ນັ້ນຍິ່ງເຮັດໃຫ້ທ່ານເບິ່ງເປັນຄົນທີ່ເວົ້າຫຼາຍໜັກເຂົ້າໄປອີກ ມານກໍຈະພະຍາຍາມເຮັດໃຫ້ທ່ານຮູ້ສຶກວ່າຕົວເອງເປັນຄົນແບບນັ້ນຢູ່ສະເໝີ ສິ່ງທີ່ມານເຮັດນັ້ນເອີ້ນວ່າການກ່າວໂທດ

ພຣະເຈົ້າຢາກໃຫ້ທ່ານພົ້ນຈາກຄວາມຮູ້ສຶກຕໍານິຕິໂທດຕົນເອງ ແຕ່ການທີ່ເຮົາຈະເປັນອິດສະລະໄດ້ນັ້ນເຮົາຕ້ອງໃຊ້ຄວາມເຊື່ອ ແລະຄວາມກ້າ ທ່ານຮູ້ບໍ່ ບໍ່ວ່າທ່ານຈະຮູ້ສຶກຕໍານິຕົນເອງຫຼາຍປານໃດ ມັນກໍບໍ່ໄດ້ຊ່ວຍແກ້ໄຂຄວາມຜິດຂອງທ່ານໄດ້ແມ່ນແຕ່ໜ້ອຍດຽວ? ມັນເປັນເລື່ອງຍາກແທ້ໆ ທີ່ຈະເຊື່ອວ່າພຣະເຈົ້າຮັກທ່ານ ແມ່ນທ່ານຈະເຮັດຫຍັງຜິດໄປກໍຕາມ

ມານພະຍາຍາມທີ່ຈະເຮັດໃຫ້ທ່ານທໍ້ຖອຍຢູ່ຕະຫຼອດເວລາໂດຍພະຍາຍາມຍັດຄວາມຄິດວ່າທ່ານເປັນຄົນເປິເປື້ອນ ແລະເປັນຕາຂີ້ດຽດ "ເຈົ້າເຮັດບາບແລ້ວເດີ້" ມານບອກ "ເຈົ້າຄິດວ່າຕົວເອງເປັນໃຜ ພຣະເຈົ້າຈະບໍ່ອວຍພອນເຈົ້າແລ້ວ ເຈົ້າຄົນເປິເປື້ອນ ຕໍ່ໄປນີ້ເຈົ້າເປັນພະຍານໃຫ້ຜູ້ໃດຟັງບໍ່ໄດ້ອີກແລ້ວ ເຈົ້າເຮັດອີຫຍັງດີໆບໍ່ໄດ້ດອກ"

ນັ້ນແຫຼະຄືເວລາທີ່ຕ້ອງໃຊ້ຄວາມກ້າທີ່ຈະຢືນຢັນຂຶ້ນໃນຝ່າຍວິນຍານແລ້ວບອກວ່າ "ພຣະບິດາເຈົ້າຂ້າ ຂ້າພຣະອົງໄດ້ເຮັດຜິດພາດໄປແລ້ວ ຂໍພຣະອົງຊົງຍົກໂທດໃຫ້ຂ້າພຣະອົງໂດຍພຣະໂລຫິດຂອງພຣະເຢຊູ ເຈົ້າມານຮ້າຍຈົ່ງໜີໄປໄກໆ ພຣະເຢຊູໄດ້ຮັບບາບແທນຂ້ອຍແລ້ວ ຢ່າມາຫຍຸ້ງກັບຂ້ອຍອີກ" ຈາກນັ້ນກໍດໍາເນີນຊີວິດຕໍ່ໄປຢ່າງມີຄວາມສຸກແລະຊື່ນຊົມຍິນດີ ແຕ່ລາງຄົນອາດຈະຄິດວ່າ "ຂ້ອຍເຮັດສິ່ງທີ່ໂງ່ງ່າວຊໍ້າແລ້ວຊໍ້າອີກ" ຂ້າພະເຈົ້າເອງກໍເຄີຍ

ຄິດແນວນັ້ນດ້ວຍ ຈົນກວ່າຂ້າພະເຈົ້າຢຸດຕຳນິຕົວເອງໃນເລື່ອງນັ້ນ ເມື່ອທ່ານຢຸດຕຳນິຕົວເອງໃນເລື່ອງນັ້ນ ເມື່ອທ່ານຢຸດຕຳນິຕົວເອງໃນສິ່ງທີ່ໄດ້ເຮັດໄປ ທ່ານກໍຈະສາມາດຢຸດການກະທຳດັ່ງກ່າວນັ້ນດ້ວຍ

ຄວາມຮູ້ສຶກຜິດແລະຕຳນິຕົນເອງ ຈະເຮັດໃຫ້ທ່ານຮູ້ສຶກໜັກອຶ້ງແລະເກັບກົດຈົນທ່ານຮູ້ສຶກບໍ່ມີອິດສະລະອີກຕໍ່ໄປ ການທີ່ຈະບໍ່ຮູ້ສຶກຕຳນິຕົນເອງໄດ້ນັ້ນ ເຮົາຕ້ອງມີຄວາມກ້າ ທ່ານຈະຕ້ອງມີໃຈກ້າທີ່ຈະໃຊ້ຄວາມເຊື່ອ ແລະຢືນຢັດຂຶ້ນຕໍ່ຕ້ານກັບຄວາມຮູ້ສຶກຜິດມານຈະບອກທ່ານວ່າ "ເຈົ້າໝາຍຄວາມວ່າ ຈະບໍ່ຮູ້ສຶກຫຍັງເລີຍຫວາເມື່ອເຮັດຜິດ? ເປັນໄປໄດ້ຈັ່ງໃດ ຢ່າງໜ້ອຍກໍໜ້າຈະຮູ້ສຶກບໍ່ສະບາຍຈັກສອງສາມຊົ່ວໂມງກໍຍັງດີ ເພາະສິ່ງທີ່ເຈົ້າເຮັດໄປນັ້ນມັນບໍ່ດີສຸດໆ" ສິ່ງທີ່ທ່ານຕ້ອງເວົ້າອອກໄປຄື "ບໍ່ມີທາງຂ້ອຍບໍ່ຮູ້ສຶກສະບາຍໃຈເດັດຂາດ" ເທື່ອສອງເທື່ອທຳອິດນັ້ນມັນຍາກ ແຕ່ສາມສີ່ເທື່ອຕໍ່ມາທ່ານກໍຈະຮູ້ສຶກວ່າເຮັດໄດ້

ໃນພຣະທຳເອຊາຢາ 53:5-6 ແລະ ຂໍ້ 11 ກ່າວວ່າເມື່ອພຣະເຢຊູຊົງຮັບເອົາບາບແທນເຮົານັ້ນ ພຣະອົງຊົງຮັບເອົາຄວາມຮູ້ສຶກຜິດໄປນຳ (ຊຶ່ງລວມເຖິງຄວາມຮູ້ສຶກຕຳນິຕົນເອງ) ມານຮ້າຍບໍ່ຕ້ອງການໃຫ້ທ່ານຫຼຸດພົ້ນຈາກຄວາມຮູ້ສຶກຕຳນິຕົນເອງ ເປັນຫຍັງ? ກໍເພາະວ່າ ຖ້າທ່ານຮູ້ສຶກຕຳນິຕົນເອງຢູ່ ທ່ານກໍບໍ່ໄດ້ສຳຜັດກັບຄວາມຮັກຂອງພຣະເຈົ້າ

ຢ່າງແທ້ຈິງ ຄວາມຮູ້ສຶກຕໍານິຕົວເອງເປັນເໝືອນກັບກໍາແພງເຫຼັກຄອຍຂວາງກັ້ນລະຫວ່າທ່ານກັບພຣະເຈົ້າແຍກທ່ານກັບພຣະເຈົ້າອອກຈາກກັນ ຖ້າທ່ານຮູ້ສຶກຜິດທ່ານກໍຈະເບິ່ງເຫັນພຣະເຈົ້າພຣະບິດາບໍ່ໄດ້ ສິ່ງທີ່ທ່ານເບິ່ງເຫັນກໍຈະມີພຽງແຕ່ຄວາມຜິດແລະຄວາມບາບທີ່ຢູ່ຕໍ່ໜ້າຕົນເອງເທົ່ານັ້ນ

ການດໍາເນີນຊີວິດໂດຍປາດສະຈາກຄວາມຮູ້ສຶກຕໍານິຕົນເອງແລະເຊື່ອວ່າ ເມື່ອພຣະເຈົ້າກ່າວວ່າ ພຣະຄຸນຂອງພຣະອົງມີຫຼາຍພໍທີ່ຈະປົກຄຸມໄດ້ແມ່ນແຕ່ຄວາມບາບຂອງເຮົາ ພຣະອົງຊົງປະສົງແນວນັ້ນແທ້ໆ ພຣະອົງຮັກທ່ານພຣະຄຸນແລະການອະໄພໂທດຂອງພຣະອົງນັ້ນເປັນຂອງຂວັນທີ່ມອບໃຫ້ລ້າໆວັນນີ້ຈົ່ງຮັບເອົາເຖີດ

ພຣະເຈົ້າຊົງຮັກທ່ານ

# 3

# ຄວາມຮັກຄືຄວາມສຳພັນ

ຊະນັ້ນເຮົາທັງຫລາຍຈິ່ງຮູ້ແລະເຊື່ອ
ໃນຄວາມຮັກທີ່ພຣະເຈົ້າຊົງມີຕໍ່ເຮົາ
ພຣະເຈົ້າຊົງເປັນຄວາມຮັກ ແລະຜູ້ໃດທີ່ຢູ່ໃນ
ຄວາມຮັກກໍຢູ່ໃນພຣະເຈົ້າ
ແລະພຣະເຈົ້າກໍຊົງສະຖິດຢູ່ໃນຜູ້ນັ້ນ
1 ໂຢຮັນ 4:16

ເຮົາຮູ້ສຶກສຳຜັດເຖິງຄວາມຮັກຂອງພຣະເຈົ້າຫຼາຍຂຶ້ນໄດ້ແນວໃດ? ແມ່ນພຣະເຈົ້າຈະຮັກເຮົາຫຼາຍປານໃດກໍຕາມ ແຕ່ຖ້າເຮົາບໍ່ຮູ້ສຶກແນວນັ້ນກໍຈະບໍ່ເປັນປະໂຫຍດຫຍັງແກ່ເຮົາເລີຍ ທ່ານຮູ້ດີວ່າທ່ານຮູ້ສຶກເປັນສຸກຫຼາຍປານໃດ ເມື່ອມີໃຜຈັກຄົນໜຶ່ງສະແດງຄວາມຮັກແກ່ທ່ານ ພຣະອົງປະສົງໃຫ້ທ່ານໃຊ້ເວລາກັບພຣະອົງເປັນປະຈຳທຸກວັນ

ທ່ານມີຄວາມສຳພັນກັບພຣະເຈົ້າເປັນການສ່ວນຕົວຢ່າງແທ້ຈິງຫຼືບໍ່? ການທີ່ທ່ານໄດ້ຮັບຄວາມພົ້ນມາດົນນານ

ແລ້ວບໍ່ໄດ້ໝາຍຄວາມວ່າ ທ່ານມີການສາມັກຄີທຳອັນດີກັບພຣະເຈົ້າສະເໝີໄປ ເມື່ອຂ້າພະເຈົ້າມືນຕາຕື່ນຂຶ້ນມາໃນຕອນເຊົ້າ ສິ່ງທຳອິດທີ່ຂ້າພະເຈົ້າຄິດເຖິງກໍຄືພຣະເຈົ້າ ແລະກ່ອນທີ່ຈະເຂົ້ານອນໃນຕອນກາງຄືນ ສິ່ງທີ່ຂ້າພະເຈົ້າຄິດເຖິງເປັນຄັ້ງສຸດທ້າຍນັ້ນກໍຄືພຣະເຈົ້າ ແລະຕະຫຼອດວັນຂ້າພະເຈົ້າຄິດເຖິງແຕ່ເລື່ອງພຣະເຈົ້າ ໃນໂລກກ້ວາງໃຫຍ່ນີ້ບໍ່ມີຫຍັງອີກແລ້ວທີ່ຂ້າພະເຈົ້າຕ້ອງການຫຼາຍຍິ່ງກວ່າທີ່ຈະໄດ້ບົວລະບັດຮັບໃຊ້ພຣະເຈົ້າ ແລະເຮັດໃຫ້ພຣະອົງຊົງພໍພະໄທ ຖ້າຈະຕ້ອງສະລະທຸກສິ່ງເພື່ອແລກກັບສິ່ງນີ້ຂ້າພະເຈົ້າກໍຖືວ່າຄຸ້ມຄ່າຢ່າງຍິ່ງ

ໃນຕົວເຮົານັ້ນມີສ່ວນທີ່ຫວ່າງເປົ່າຢູ່ບ່ອນໜຶ່ງຊຶ່ງມີແຕ່ພຣະເຈົ້າເທົ່ານັ້ນທີ່ຈະຕື່ມໃຫ້ເຕັມໄດ້ພໍດີ ສິ່ງອື່ນໃດທີ່ທ່ານປາດຖະໜາຫຼືສະແຫວງຫາບໍ່ມີທາງຕື່ມທີ່ຫວ່າງເປົ່ານັ້ນໃຫ້ເຕັມໄດ້ ລາງຄົນອາດຈະບອກຕົວເອງວ່າ “ຂ້ອຍຮູ້ເລື່ອງນີ້ດີຢູ່ແລ້ວນາ ຂ້ອຍໄດ້ຮັບເຊື່ອໃນພຣະເຢຊູແລ້ວ” ແຕ່ທ່ານໄດ້ຮັບພະອົງໄວ້ໃນຊີວິດແບບທຸກນາທີ ທຸກວັນແລະໃນທຸກສະຖານະການຫຼືບໍ່? ທ່ານໄດ້ຮັບເອົາຄວາມຮັກຂອງພຣະເຈົ້າແລ້ວຫຼືຍັງ?

ພຣະເຈົ້າຊົງຮັກທ່ານ ແລະທ່ານເປັນຄົນພິເສດສຳລັບພຣະອົງ ພຣະອົງຊົງເນລະມິດສ້າງເຮົາຂຶ້ນມາ ເພື່ອໃຫ້ສາມັກຄີທຳກັບພຣະອົງ ນີ້ຄືພະປະສົງທີ່ໃຫຍ່ທີ່ສຸດແລະ

ເປັນນໍ້າພະໄທອັນສົມບູນແບບສໍາລັບຊີວິດຂອງທ່ານທຸກເຊົ້າພຣະອົງຈະຊົງນ້ອມພຣະກາຍລົງມາຂະນະປະທັບຢູ່ເທິງພະບັນລັງແລະກ່າວວ່າ "ສະບາຍດີຕອນເຊົ້າເຮົາຮັກເຈົ້າເດີ"

ເພື່ອນຂອງຂ້າພະເຈົ້າຄົນໜຶ່ງໄດ້ເຫັນນິມິດຂະນະທີ່ກໍາລັງອະທິຖານຢູ່ ລາວເບິ່ງເຫັນພາບພຣະບິດາກໍາລັງສະເດັດດໍາເນີນໄປຕາມເຮືອນແຕ່ລະຫຼັງໃນອາເມລິກາ ໃນຊ່ວງທີ່ເຂົາກໍາລັງຕື່ນນອນຕອນເຊົ້າ ພຣະອົງຊົງສະເດັດເຂົ້າໄປໃນເຮືອນ ແລະພ້ອມທີ່ຈະສາມັກຄີທໍາແລະສົນທະນາກັບພວກເຂົາ ພຣະອົງນັ່ງລົງເທິງຕັ່ງຂ້າງໂຕະໜ່ວຍໜຶ່ງ ຄົນເຫຼົ່ານັ້ນຕື່ນນອນຂຶ້ນມາກໍມາທີ່ໂຕະນັ້ນແລ້ວກໍອອກຈາກເຮືອນໄປ ເຂົາກັບເຂົ້າມາແລ້ວກໍອອກໄປອີກພວກເຂົາທູນພຣະເຈົ້າວ່າ "ລໍຖ້າກ່ອນພຣະອົງເຈົ້າຂ້າເຊີນປະທັບຖ້າຢູ່ນີ້ ຈັກບຶດໜຶ່ງ ຖ້າຂ້າພຣະອົງເຮັດວຽກອັນນີ້ແລ້ວກ່ອນ ຂ້າພຣະອົງຈະຮີບກັບມາສົນທະນາກັບພຣະອົງຢ່າຟ້າວກ່ອນ ເດີພຣະເຈົ້າ ຟ້າວກ່ອນ"

ເມື່ອຮອດຕອນແລງຜູ້ຍິງຄົນນີ້ກໍເຫັນພາບພຣະເຈົ້າສະເດັດອອກຈາກເຮືອນໄປຢ່າງຊຶມເສົ້າ ເພາະໃນວັນນັ້ນບໍ່ມີໃຜກັບມາສົນທະນາກັບພຣະອົງເລີຍ ລາວບອກວ່າມັນເປັນພາບທີ່ສະເທືອນໃຈຫຼາຍ

ຢ່າຫຍຸ້ງກັບວຽກງານຫຼາຍເກີນໄປ ຖ້າທ່ານບໍ່ມີເວລາອະທິຖານແລະໃຊ້ເວລາກັບພຣະເຈົ້າ ສະແດງວ່າທ່ານຫຍຸ້ງກັບວຽກຫຼາຍເກີນໄປແລ້ວຈິ່ງໃຫ້ເວລາທີ່ຈະທູນຕໍ່ພຣະເຈົ້າວ່າທ່ານຮັກພຣະອົງສໍ່າໃດ ເມື່ອສິ່ງສາລະພັດສູນສິ້ນໄປ ກໍຈະບໍ່ມີອັນໃດເຫຼືອອີກແລ້ວ ນອກຈາກພຣະເຈົ້ານັ້ນແຫຼະຄືຄວາມຈິງ ແລະຖ້າທ່ານບໍ່ມີຄວາມສໍາພັນກັບພຣະເຈົ້າ ຕອນນັ້ນມັນກໍຄົງຈະສວາຍໄປໜ້ອຍໜຶ່ງທີ່ຈະມາເລີ່ມສ້າງຄວາມສໍາພັນ ມັນບໍ່ໄດ້ໝາຍຄວາມວ່າທ່ານຈະບໍ່ໄດ້ໄປສະຫວັນ ແຕ່ທ່ານໄດ້ພາດໂອກາດທີ່ຈະມີຊີວິດໃນໄຊຊະນະໄປຢ່າງໜ້າເສຍດາຍ

ຂ້າພະເຈົ້າຂໍແນະນໍາໃຫ້ທ່ານຈັດເວລາໂດຍສະເພາະຈັກໜຶ່ງປີ ເພື່ອເປີດໂອກາດໃຫ້ພຣະເຈົ້າສໍາແດງຄວາມຮັກແກ່ທ່ານຢ່າງດຽວເທົ່ານັ້ນ ຂໍໃຫ້ຢຸດພະຍາຍາມເຮັດອັນໃດດ້ວຍກໍາລັງຂອງຕົວເອງ ແລ້ວເລີ່ມທໍາການທຸກຢ່າງດ້ວຍຄວາມເຊື່ອ ເປັນຄົນຂອງພຣະເຈົ້າທີ່ເຕັມໄປດ້ວຍລິດເດດແລະຄວາມເຊື່ອ ໃຫ້ທ່ານຢູ່ໃນຜູ້ນັ້ນ

ເຊົ້າມື້ນີ້ຕອນທ່ານຕື່ນຂຶ້ນມາ ທ່ານໄດ້ໃຊ້ເວລາຄຶດທົບທວນເຖິງຄວາມຮັກຂອງພຣະເຈົ້າທີ່ມີຕໍ່ທ່ານແລ້ວຫຼືຍັງ? ເມື່ອເຮົາຕື່ນນອນໃໝ່ໆ ເຮົາມັກບໍ່ຢາກເຮັດຫຍັງພໍປານໃດ ແຕ່ທ່ານຈໍາເປັນຕ້ອງໃຊ້ປາກຂອງຕົວເອງກະຕຸ້ນເນື້ອໜັງ ແລະຍອມໃຫ້ມະນຸດຝ່າຍວິນຍານຂອງຕົນເພື່ອກະທໍາ

ສິ່ງຕ່າງໆທີ່ດີ

ດັ່ງນັ້ນເມື່ອທ່ານຕື່ນຂຶ້ນມາຕອນເຊົ້າ ທ່ານຕ້ອງເລີ່ມເວົ້າວ່າ "ໂອພຣະບິດາຂ້າພຣະອົງຂອບຄຸນພຣະອົງທີ່ຊົງຮັກຂ້າພຣະອົງມາກມາຍ ຂອບຄຸນທີ່ສົ່ງພຣະເຢຊູມາສິ້ນພຣະຊົນເພື່ອຊ່ຳພຣະອົງ ຂ້າແດ່ພຣະບິດາ ຂ້າພຣະອົງຂອບພຣະຄຸນທີ່ຂ້າພຣະອົງມີພຣະວິນຍານບໍລິສຸດສະຖິດຢູ່ດ້ວຍຂອບພຣະຄຸນພຣະອົງສຳລັບລິດເດດທີ່ເຮັດໃຫ້ພຣະເຢຊູຄືນພຣະຊົນໄດ້ດຳລົງຢູ່ໃນຂ້າພຣະອົງຂອບພຣະຄຸນພຣະເຈົ້າທີ່ໃນວັນນີ້ ບໍ່ວ່າຂ້າພຣະອົງຈະໄປທີ່ໃດ ຂ້າພຣະອົງກໍຈະເປັນພຣະພອນ ພຣະອົງເຈົ້າຂ້າພຣະອົງຊົງຮັກຂ້າພຣະອົງ ພຣະອົງຊົງຮັກຂ້າພຣະອົງ! ຂ້າພຣະອົງເປັນລູກຄົນພິເສດຂອງພຣະອົງ ຂ້າພຣະອົງເປັນແກ້ວຕາດວງໃຈຂອງພຣະອົງ ພຣະອົງຊົງຮັກຂ້າພຣະອົງ!"

ທ່ານຕ້ອງເວົ້າກັບຕົວເອງແລະເຕືອນຕົວເອງໃຫ້ລະນຶກຢູ່ສະເໝີວ່າ ທ່ານກຳລັງຖືກອ້ອມຮອບແລະປົກຄຸມດ້ວຍຄວາມຮັກຂອງພຣະເຈົ້າ ພຣະຄຳພີກ່າວວ່າ ພຣະເຈົ້າສະລັກພາບຂອງທ່ານໄວ້ເທິງຝາພຣະຫັດຂອງພຣະອົງ (ອຊຢ 49:16) ຂ້າພະເຈົ້າສາມາດເຫັນພາບຂອງພຣະອົງຢູ່ເບື້ອງເທິງນັ້ນກຳລັງກ່າວວ່າ "ເບິ່ງແມ ເຫັນບໍ? ລູກສາວຂອງເຮົາງາມຫຼາຍແມ່ນບໍ? ເຮົາຮັກເຂົາຫຼາຍ ເບິ່ງໃບໜ້າລູກໆຂອງເຮົາດຸ ຢູ່ເທິງຝາມືຂອງເຮົານີ້ເດ" ພຣະອົງ

ສະລັກພາບຂອງທ່ານໄວ້ທີ່ນັ້ນເພື່ອເປັນເຄື່ອງເຕືອນໃຈວ່າພຣະອົງຊົງຮັກທ່ານແລະຊົງປາດຖະໜາຢ່າງຍິ່ງທີ່ຈະສາມັກຄີທຳກັບທ່ານ ລະນຶກຢູ່ສະເໝີທີ່ຈະມີໃຈຂອບພຣະຄຸນພຣະເຈົ້າ ແລະພັດທະນາຄວາມສຳພັນການສາມັກຄີທຳກັບພຣະອົງ ບາງເທື່ອທ່ານຕ້ອງກົ້ມໜ້າລົງອະທິຖານຂອບພຣະຄຸນພຣະອົງທີ່ທ່ານໄດ້ຮັບຄວາມພົ້ນແລ້ວກໍເງີຍໜ້າຂຶ້ນສະແດງ

ຄວາມຮັກຕໍ່ພຣະອົງອີກ ລອງອ່ານເບິ່ງຕໍ່ໄປໃນພຣະຄຳ 1 ໂຢຮັນ 4:16-17 ເຊິ່ງພຣະເຈົ້າກ່າວໄວ້ວ່າ "...ພຣະເຈົ້າຊົງເປັນຄວາມຮັກ ແລະຜູ້ໃດທີ່ຢູ່ໃນຄວາມຮັກກໍຢູ່ໃນພຣະເຈົ້າ ແລະພຣະເຈົ້າກໍຊົງສະຖິດຢູ່ໃນຜູ້ນັ້ນໃນຂໍ້ນີ້ແຫຼະຄວາມຮັກຂອງເຮົາຈຶ່ງສົມບູນເພື່ອເຮົາທັງຫຼາຍຈະໄດ້ມີຄວາມໝັ້ນໃຈໃນວັນພິພາກສາ"

ການທີ່ເຮົາຮູ້ວ່າພຣະເຈົ້າຊົງຮັກເຮົາ ເຮັດໃຫ້ເຮົາມີຄວາມໝັ້ນໃຈໃນພຣະອົງແລະເກີດຄວາມໄວ້ວາງໃຈໃນຄວາມສັດຊື່ຂອງພຣະອົງ

ພຣະພອນທັງສິ້ນມາເຖິງທ່ານເມື່ອທ່ານຍອມໃຫ້ພຣະເຈົ້າຊົງຮັກທ່ານ ເຊັ່ນ ທ່ານຈະມີຄວາມເຊື່ອຫຼາຍຂຶ້ນມີໄຊຊະນະເໜືອຄວາມບາບ ໄດ້ຮັບການຮັກສາໂລກ ຄວາມຮັ່ງມີຍິນດີ ມັນຈະມາເຖິງທ່ານໄດ້ກໍໂດຍທາງທີ່ທ່ານຍອມໃຫ້ພຣະເຈົ້າຊົງຮັກທ່ານ ຫຼາຍເທື່ອເຮົາມັກຈະ

ເຮັດກັບກັນແລະຄິດວ່າ "ຂ້ອຍ ຈະຕ້ອງຮັກພຣະເຈົ້າ" ແຕ່ຂ້າພຣະເຈົ້າ ເຊື່ອວ່າທ່ານຕ້ອງຍອມໃຫ້ພຣະເຈົ້າ ຮັກທ່ານເສຍກ່ອນ ຂ້າພະເຈົ້າບໍ່ເຊື່ອວ່າທ່ານ ຈະສະແດງ ຄວາມຮັກຕໍ່ພຣະເຈົ້າໄດ້ຈົນກວ່າທ່ານຈະຍອມໃຫ້ພຣະເຈົ້າ ຮັກທ່ານເສຍກ່ອນ

ຂ້າພະເຈົ້າອາດຈະບອກທ່ານວ່າ ໃຫ້ທ່ານສາມັກຄີທຳ ກັບພຣະເຈົ້າ ແລະທ່ານຈຳເປັນຕ້ອງມີການສາມັກຄີທຳກັບ ພຣະເຈົ້າແທ້ໆ ແຕ່ທ່ານຈະເຮັດແນວໃດຈຶ່ງຈະສາມັກຄີທຳ ກັບພຣະເຈົ້າໄດ້? ເມື່ອພຣະເຈົ້າບອກໃຫ້ຂ້າພະເຈົ້າກັບ ພຣອີງ ຂ້າພະເຈົ້າກໍໄປນັ່ງຢູ່ເທິ່ງມ້ານັ່ງແລ້ວກໍເວົ້າວ່າ "ເອີ່ລະ ຈະໃຫ້ເຮັດແນວໃດໄປ ພຣະອົງເຈົ້າຂ້າ?" ຖືກແລ້ວ! ຂ້າບໍ່ຮູ້ເລີຍວ່າຈະສາມັກຄີທຳກັບພຣະເຈົ້າແນວໃດ ເພາະຈົນເຖິງຕອນນັ້ນ ຂ້າພະເຈົ້າຍັງບໍ່ຮູ້ຢ່າງແທ້ຈິງ ວ່າ ພຣະເຈົ້າຮັກຂ້າພະເຈົ້າຫຼາຍປານໃດ

ທ່ານສະແດງຄວາມຮູ້ສຶກຕໍ່ຄົນອື່ນໆໃຫ້ເຂົາເຫັນວ່າ ທ່ານຮັກແລະບູຊາເຂົາແທ້ໆໄດ້ແນວໃດ ຖ້າທ່ານບໍ່ແນ່ໃຈວ່າ ພວກເຂົາຮັກທ່ານ? ທ່ານຈະຕ້ອງຢ້ານວ່າຈະເຮັດສິ່ງທີ່ໃຫ້ ຕົວເອງ ຂາຍໜ້າ ແຕ່ຖ້າເປັນຄົນທີ່ທ່ານຮູ້ວ່າ ເຂົາຮັກແລະ ຍອມຮັບທ່ານ ທ່ານກໍຈະຮູ້ສຶກສະບາຍໃຈທີ່ຢູ່ກັບເຂົາ ອັນໃດທີ່ຂ້າພະເຈົ້າເວົ້າແລະ ເຮັດກັບຄົນອື່ນບໍ່ໄດ້ນັ້ນ ຂ້າພະເຈົ້າສາມາດເວົ້າແລະເຮັດອັນໃດໜຶ່ງກັບສາມີ

ຂອງຂ້າພະເຈົ້າໄດ້ ເພາະຮູ້ວ່າເຂົາຮັກຂ້າພະເຈົ້າ ສໍາລັບເຮົາກັບພະເຈົ້າກໍເປັນເຊັ່ນດຽວກັນ

ດັ່ງນັ້ນ ຂໍໃຫ້ທ່ານເລີ່ມເຮັດກ້າວທໍາອິດ ຈົ່ງຍອມໃຫ້ໂອກາດແກ່ພຣະເຈົ້າ ແລ້ວພຣະອົງຈະຊົງສອນໃຫ້ທ່ານຮູ້ຈັກວິທີທີ່ ຈະສາມັກຄີທໍາກັບພຣະອົງ ໃຫ້ຖາມຕົວເອງດ້ວຍຄໍາຖາມນີ້ວ່າ ຂ້ອຍຮູ້ສຶກສະບາຍໃຈບໍ່ທີ່ໄດ້ຢູ່ລໍາພັງກັບພຣະເຈົ້າ?

ພຣະເຈົ້າຊົງຮັກທ່ານ

# 4

# ຄວາມຮັກ ຄວາມໄວ້ວາງໃຈ ແລະຄວາມເຊື່ອ

"ເພາະວ່າໃນພຣະເຢຊູຄຣິສນັ້ນ ການທີ່ຮັບພິທີຕັດຫຼືບໍ່ຮັບ ກໍບໍ່ເກີດປະໂຫຍດອັນໃດ ແຕ່ຄວາມເຊື່ອ ຊຶ່ງສະແດງອອກເປັນກິດຈະວັດທີ່ເຮັດດ້ວຍຄວາມຮັກນັ້ນສຳຄັນ"

ຄາລາເຕຍ 5:6

ພວກເຮົາສ່ວນໃຫຍ່ໃຊ້ເວລາຫຼວງຫຼາຍ ໃນການພະຍາຍາມເຮັດໃຫ້ຕົວເອງມີຄວາມເຊື່ອຫຼາຍຂຶ້ນ ເຮົາຮູ້ວ່າເຮົາປາກສະຈາກຄວາມເຊື່ອແລ້ວ ຈະເປັນທີ່ພໍພຣະໄທພຣະເຈົ້າບໍ່ໄດ້ (ເຮັບເລີ 11:6 ດັ່ງນັ້ນເຮົາຈຶ່ງພະຍາຍຍາມດີ້ນລົນເຮັດສິ່ງຕ່າງໆ ເພື່ອທີ່ຈະເຮັດໃຫ້ຄວາມເຊື່ອເພີ່ມຫຼາຍຂຶ້ນ ແຕ່ຄວາມເຊື່ອເປັນເລື່ອງຂອງຫົວໃຈ ເຮົາຈະມີ

ຄວາມເຊື່ອໄດ້ກໍໂດຍທາງການມີຄວາມສຳພັນໃນຄວາມຮັກ ກັບພຣະເຈົ້າເທົ່ານັ້ນ ຂ້າພະເຈົ້າຈະສອນໃຫ້ທ່ານມີ ຄວາມເຊື່ອແທ້ໆບໍ່ໄດ້ ແຕ່ຂ້າພຣະເຈົ້າສາມາດສອນໃຫ້ທ່ານ ຮູ້ຫຼັກແຫ່ງຄວາມເຊື່ອຈົນເຮັດໃຫ້ທ່ານຮູ້ສຶກຫິວກະຫາຍ ຈົນຍອມທີ່ຈະເຮັດທຸກຢ່າງເພື່ອ ໃຫ້ໄດ້ຄວາມເຊື່ອມາ ມັນຈະເກີດຂຶ້ນໄດ້ກໍໂດຍທາງການສຳແດງທີ່ມາຈາກ ພຣະເຈົ້າທເທົ່ານັ້ນ

ຈົ່ງຢຸດດີ້ນລົນສະແຫວງຫາຄວາມເຊື່ອເພາະຄິດວ່າ ຈະເຮັດໃຫ້ພຣະເຈົ້າພໍພຣະໄທຊະ ແລ້ວໃຊ້ເວລາແລະ ຄວາມພະຍາຍາມເຫຼົ່ານັ້ນມາສະແດງຄວາມຮັກຕໍ່ພຣະເຈົ້າ ດີກວ່າ ໃຫ້ເຮົາໃຊ້ເວລາແຕ່ລະວັນສະແດງຄວາມຮັກຕໍ່ ພຣະເຈົ້າ ແລະຍອມໃຫ້ພຣະອົງຊົງຮັກທ່ານ

"ເພາະວ່າເຮົາດຳເນີນຊີວິດຕາມຄວາມເຊື່ອ (ເຮົາ ພະຍາຍາມປະພຶດແລະປະຕິບັດຕົນເອງໂດຍທີ່ເຊື່ອ ໃນການມີຄວາມສຳພັນ ກັບພຣະເຈົ້າແລະສິ່ງອື່ນໆ ທີ່ກ່ຽວຂ້ອງກັບພຣະເຈົ້າໂດຍ ຄວາມໄວ້ວາງໃຈແລະຄວາມຮູ້ ສຶກອົບອຸ່ນອັນບໍລິສຸດ ດັ່ງນັ້ນ ເຮົາຈຶ່ງດຳເນີນ) ບໍ່ແມ່ນ ຕາມທີ່ຕາເຫັນ"

2ໂກລິນ 5:7

ຄັ້ງໜຶ່ງ ທີ່ຂ້າພະເຈົ້າອ່ານຂໍ້ພຣະຄຳພີຂໍ້ນີ້ ພຣະເຈົ້າເລີ່ມກ່າວບາງສິ່ງບາງຢ່າງໃນໃຈຂ້າພະເຈົ້າ ຂ້າພະເຈົ້າພະຍາຍາມທີ່ຈະກຳເນີນຊີວິດໂດຍຄວາມເຊື່ອ ພຣະຄຳພີສະບັບ ຂະຫຍາຍຄວາມແປ 2 ໂກລິນ 5:7 ໄວ້ວ່າ "ເຮົາພະຍາຍາມປະພຶດແລະປະຕິບັດຕົນເອງ ໂດຍທີ່ເຊື່ອໃນການມີຄວາມສຳພັນກັບພຣະເຈົ້າ"

ກ່າວອີກແນວໜຶ່ງກໍຄື ເຮົາຈະດຳເນີນຊີວິດໃນຄວາມເຊື່ອໄດ້ຫຼືບໍ່ນັ້ນ ຂຶ້ນຢູ່ກັບຄວາມສຳພັນຂອງເຮົາກັບພຣະເຈົ້າ ທ່ານເຂົ້າໃຈຫຼືບໍ່? ຖ້າຄົນໃດເຊື່ອວ່າຕົນເອງເປັນຄົນອະທຳ ເຂົາກໍອາດຈະລືມທີ່ຈະດຳເນີນຊີວິດໃນຄວາມເຊື່ອໄປດ້ວຍ ຖ້າຜູ້ໃດເຊື່ອວ່າຕົວເອງເປັນແມງບົ້ງເຖົ່າໆທີ່ຢູ່ໃນດິນ ແລະພຣະເຈົ້າບໍ່ໄດ້ຮັກເຂົາເລີຍເຂົາກໍຕ້ອງລືມການດຳເນີນຊີວິດໄປຄືກັນ ມີຫຼາຍຄົນພະຍາຍາມດຳເນີນຊີວິດໃນຄວາມເຊື່ອ ແຕ່ເຂົາພັດບໍ່ໄດ້ມີສິ່ງເຫຼົ່ານີ້ຢູ່ໃນຫົວໃຈຂອງເຂົາເລີຍ

ຄາລາເຕຍ 5:6 ກ່າວວ່າ ຄວາມເຊື່ອສະແດງໄດ້ໂດຍທາງຄວາມຮັກ ພຣະເຈົ້າໄດ້ໃຊ້ຄວາມຄິດໃນໃຈຂ້າພະເຈົ້າວ່າ "ທຸກໆຄົນຄິດວ່າ ຂໍ້ພຣະຄຳພີຕອນນີ້ໝາຍຄວາມວ່າ ຖ້າເຂົາບໍ່ຮັກຄົນອື່ນ ຄວາມເຊື່ອຂອງເຂົາກໍຈະບໍ່ເກີດຜົນ ນັ້ນບໍ່ແມ່ນ ຄວາມໝາຍຂອງຂໍ້ນີ້ເລີຍຄວາມໝາຍທີ່ແທ້ຈິງຂອງຂໍ້ນີ້ຄື ຖ້າພວກເຂົາບໍ່ຮູ້ວ່າພຣະເຈົ້າ

ຮັກຫຼາຍພຽງໃດ ຄວາມເຊື່ອຂອງເຂົາກໍຈະບໍ່ເກີດຜົນເລີຍ "ຄວາມເຊື່ອຈະບໍ່ເກີດຜົນຖ້າປາດສະຈາກຄວາມຮັກ ແຕ່ບໍ່ແມ່ນການທີ່ທ່ານສາມາດຮັກຄົນອື່ນ ແຕ່ໝາຍເຖິງການທີ່ທ່ານຍອມໃຫ້ພຣະເຈົ້າຜູ້ຊົງລິດຮັກທ່ານ

ທັງສອງຢ່າງນີ້ແຕກຕ່າງກັນຫຼາຍ ການໄວ້ວາງໃຈໃນພຣະເຈົ້າ ແລະການດຳເນີນຊີວິດໃນຄວາມເຊື່ອ ຄືການເພິ່ງພາ ໄວ້ວາງໃຈໃນພຣະອົງສຳລັບທຸກສິ່ງ ທ່ານຈະເຮັດແນວນັ້ນກັບໃຜຈັກຄົນບໍ່ໄດ້ ຖ້າທ່ານບໍ່ຮູ້ວ່າເຂົາຮັກທ່ານ ທ່ານບໍ່ມີທາງທີ່ຈະໄວ້ວາງໃຈໃນພຣະເຈົ້າໄດ້ ຖ້າທ່ານບໍ່ຮູ້ວ່າພຣະອົງຊົງຮັກທ່ານ

ຖ້າທ່ານຮູ້ຢ່າງແທ້ຈິງວ່າພຣະເຈົ້າຊົງຮັກທ່ານຫຼາຍພຽງໃດ ກໍຄືສິບໍ່ເປັນການຍາກປານໃດທີ່ທ່ານຈະຍອມຮັບເອົາການຮັກສາໂລກ ແລະຄົງຈະບໍ່ຍາກປານໃດທີ່ທ່ານຈະຍອມໃຫ້ພຣະເຈົ້າຊ່ວຍແກ້ໄຂບັນຫາໃນດ້ານການເງິນຂອງທ່ານ

ເຫດຜົນທີ່ທ່ານບໍ່ສາມາດຮັບການຊ່ວຍເຫຼືອໄດ້ ກໍຍ້ອນທ່ານບໍ່ຍອມເຊື່ອຢ່າງແທ້ຈິງດ້ວຍສຸດໃຈວ່າພຣະເຈົ້າກຳລັງປະທານສິ່ງນັ້ນໆໃຫ້ແກ່ທ່ານນັ້ນ ທ່ານອາດຈະເວົ້າວ່າ "ຂ້ອຍກໍຢາກຈະເຊື່ອແນວນັ້ນຄືກັນ ແຕ່ຈະຕ້ອງເຮັດອັນໃດແດ່ຈຶ່ງຈະມີຄວາມເຊື່ອແນວນັ້ນໄດ້?"

ທ່ານຈະຕ້ອງມີຄວາມຮັກຂອງພຣະເຈົ້າຢູ່ໃນຕົວທ່ານ ສິ່ງທີ່ທ່ານຈຳເປັນຈະຕ້ອງເຮັດກໍຄື ເມື່ອພຣະເຈົ້າຊົງສຳແດງວ່າ ພຣະອົງຊົງຮັກທ່ານກໍໃຫ້ຍອມຮັບຕາມນັ້ນ ພຣະຄຳພີກ່າວວ່າ "ເຮົາທັງຫຼາຍຮັກ ກໍຍ້ອນພຣະອົງຊົງຮັກເຮົາກ່ອນ

ທຸກຢ່າງມັນກໍຢູ່ໃນຕົວທ່ານຢູ່ແລ້ວ ໃນຫົວໃຈຂອງທ່ານຫັ້ນແຫຼະ ມັນຢູ່ທາງໃນ ພຣະເຈົ້າຮັກທ່ານທ່ານສຸດຍອດ ທ່ານເປັນຄົນທີ່ມີຄ່າ ເປັນຄົນພິເສດແທ້ໆພຣະເຈົ້າຊົງກທ່ານ ບໍ່ມີໃຜອີກແລ້ວໃນໂລກນີ້ ທີ່ຈະຮັກທ່ານເທົ່າກັບພຣະເຈົ້າຊົງຮັກ

ທ່ານບໍ່ຕ້ອງການໃຜອີກແລ້ວນອກຈາກພຣະເຈົ້າ ແຕ່ພຣະອົງກໍປະທານຄົນອື່ນໆເຈົ້າມາໃນຊີວິດຂອງທ່ານດ້ວຍຂໍ້ທີຈິງໃນເລື່ອງນີ້ກໍຄືວ່າ ໃນໂລກນີ້ຖ້າບໍ່ມີໃຫອີກແລ້ວ ຖ້າບໍ່ມີໃຜອີກແລ້ວມີແຕ່ທ່ານກັບພຣະເຈົ້າເທົ່ານັ້ນທ່ານກໍຍັງມີຄວາມສຸກຢູ່ໄດ້ ສະເຈົ້າຊົງເປັນສະຫາຍດີເລີດຂອງທ່ານ ພຣະອົງຈະເປັນຄູ່ຊີວິດຂອງທ່ານ ຖ້າທ່ານຍັງບໍ່ມີຄູ່ຊີວິດພຣະອົງຈະຊົງເປັນພໍ່ແລະແມ່ໃຫ້ແກ່ທ່ານຖ້າທ່ານບໍ່ມີພໍ່ແມ່

ພຣະເຈົ້າຮັກທ່ານຫຼາຍຂະໜາດນັ້ນແທ້ໆ ນັ້ນຄືວິທີທີ່ທ່ານ ສາມາດໃຊ້ຄວາມເຊື່ອເພື່ອຮັບເອົາສິ່ງຕ່າງໆຈາກພຣະອົງ ພຣະອົງຊົງຮັກທ່ານຫຼາຍຈົນທ່ານຮູ້ວ່າ

ພຣະອົງຊົງປະສົງໃຫ້ທ່ານໄດ້ສິ່ງນັ້ນໆ ແລະຖ້າທ່ານຍັງບໍ່ຮູ້ວ່າ ພຣະເຈົ້າຊົງປະສົງໃຫ້ທ່ານໄດ້ສິ່ງນັ້ນ ທ່ານກໍຍັງບໍ່ມີຄວາມເຊື່ອຫຼາຍພໍທີ່ຈະຮັບສິ່ງໃດໆໄດ້ເລີຍ

ຄວາມເຊື່ອກະທຳການໄດ້ໂດຍຍອມໃຫ້ພຣະເຈົ້າຊົງຮັກທ່ານ ມັນບໍ່ໄດ້ກະທຳໂດຍການທີ່ທ່ານອອກໄປພະຍາຍາມສະແດງຄວາມຮັກຕໍ່ຄົນອື່ນໃດ ຈົ່ງຍອມໃຫ້ພຣະເຈົ້າຮັກທ່ານແລະບອກກັບພຣະອົງໝົດມືວ່າ "ໂອພຣະອົວເຈົ້າຂ້າ ຂ້າພຣະອົງຮູ້ວ່າພຣະອົງຊົງຮັກຂ້າພຣະອົງ ຮາເລລູຢາ ພຣະບິດາເຈົ້າຂ້າ ຂໍສັນເສີນຍົກຍໍພຣະນາມຂອງພຣະອົງ"

ສະມິດ ວິກເກິລສເວິຣ໌ທ ເປັນອັດຄະທູດທີ່ຍິ່ງໃຫຍ່ຄົນໜຶ່ງຂອງພຣະເຈົ້າ ມີບາງຄົນໄດ້ຖາມທ່ານວ່າທ່ານໃຊ້ເວລາໃນການອະທິຖານດົນຫຼືບໍ່ ທ່ານຕອບເຂົາວ່າ "ຂ້າພະເຈົ້າເກືອບສິບໍ່ເຄີຍອະທິຖານດົນກວ່າ 30 ນາທີເລີຍ ແຕ່ຂ້າພະເຈົ້າກໍອະທິຖານເກືອບທຸກໄລຍະ 30 ນາທີ" ຄັ້ງໜຶ່ງທ່ານເຄີຍກ່າວວ່າຖ້າທ່ານປ່ອຍໃຫ້ເວລາຜ່ານໄປດົນກວ່າ 15 ນາທີ ໂດຍທີ່ບໍ່ຕິດຕໍ່ ຫຼືສົນທະນາກັບພຣະເຈົ້າເລີຍ ທ່ານຈະຕ້ອງກັບໃຈເສຍໃໝ່

ພວກເຮົາພະຍາຍາມສະແຫວງຫາສິ່ງຕ່າງໆ ແບບກັບດ້ານ ເຮົາຈະເຮັດແນວໃດໃຫ້ເກີດຂຶ້ນໂດຍກຳລັງຂອງເຮົາເອງບໍ່ໄດ້ ພຣະເຈົ້າຈະຊົງອວຍພຣະພອນທ່ານ ເພາະພຣະອົງ

ຊົງຮັກທ່ານ ພຣະອົງຈະປະທານສິ່ງຕ່າງໆໃຫ້ແກ່ທ່ານແບບດຽວກັນກັບທີ່ພຣະອົງປະທານຄວາມພົ້ນໃຫ້ແກ່ທ່ານ

ທ່ານບໍ່ມີທາງທີ່ຈະເຮັດໃຫ້ສະມາຊິກໃນຄອບຄົວຫຼືຄົນອື່ນຮັບຄວາມພົ້ນໄດ້ ໂດຍການກະທຳຂອງທ່ານເອງ ຈົ່ງຍອມໃຫ້ພຣະເຈົ້າຮັກທ່ານ ຈາກນັ້ນເມື່ອເຖິງເວລາທີ່ເຈົ້າພົບກັບສະມາຊິກໃນຄອບຄົວ ທ່ານກໍຈະພ້ອມທີ່ຈະຮັກພວກເຂົາ ພຣະຄຳພີກ່າວວ່າ ຖ້າທ່ານສະແດງຄວາມຮັກຕໍ່ເຂົາ ແລະພຸດພະຍາຍາມທີ່ຈະນຳວິນຍານຂອງເຂົາເຂົ້າດ້ວຍຄຳເວົ້າຫຼືເຕັກນິກທີ່ສົດໃສ ທ່ານກໍຈະສາມາດນຳເຂົາມາເຖິງພຣະເຢຊູໄດ້ ພຣະວິນຍານຂອງພຣະເຈົ້ານຳຄອບຄົວຂອງທ່ານໂດຍຜ່ານທາງຄວາມຮັກຂອງພຣະເຈົ້າ ແຕ່ທ່ານຈະຮັກຄົນອື່ນບໍ່ໄວ້ ຖ້າເສຍທ່ານຍັງບໍ່ຍອມໃຫ້ພຣະເຈົ້າຮັກທ່ານເສຍກ່ອນ

ເອເຟໂຊ 2:8 ກ່າວວ່າ "ດ້ວຍວ່າຊຶ່ງເຈົ້າທັງຫຼາຍໄດ້ຊົງໂຜດໃຫ້ພົ້ນນັ້ນກໍຍ້ອນພຣະຄຸນ ໂດຍທາງຄວາມເຊື່ອ ສິ່ງເຫຼົ່ານີ້ບໍ່ແມ່ນພວກເຈົ້າເຮັດເອງ ແຕ່ພຣະເຈົ້າຊົງປະທານໃຫ້" ທ່ານຕົກຕອງຫຼືບໍ່ວ່າບໍ່ທ່ານບໍ່ຕ້ອງກະທຳສິ່ງໃດເລີຍເພື່ອທີ່ຈະພົ້ນ ພວກເຂົາສ່ວນໃຫຍ່ມີຊີວິດທີ່ແຫຼວແຫຼກພໍໆກັນ ກ່ອນທີ່ພຣະເຢຊູຊົງຊ່ອຍເຮົາໃຫ້ພົ້ນ ແນ່ນອນວ່າ ການທີ່ເຮົາໄດ້ຮັບຄວາມພົ້ນນັ້ນບໍ່ໄດ້ຂຶ້ນຢູ່ກັບຄວາມດີຂອງເຮົາ ຫຼືການທີ່ເຮົາໄດ້ເຮັດສິ່ງທີ່

ຖືກຕ້ອງ ແຕ່ມັນເປັນຍ້ອນສິ່ງດຽວເທົ່ານັ້ນຄືເພາະວ່າ ພຣະເຈົ້າຊົງຮັກເຮົາຫຼວງຫຼາຍ ຈົນໄດ້ຊົງປະທານພຣະບຸດ ອົງດຽວ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນ ແຕ່ມີຊີວິດອັນຕະຫຼອດ ໄປເປັນນິດ (ຢຮ 3:16)

ຄຳວ່າພຣະຄຸນ ອາດແປຄວາມໝາຍໄດ້ອີກ ຢ່າງໜຶ່ງ ຄື ການທີພຣະເຈົ້າຊົງຊອບພຣະໄທທີຈະໃຊ້ ຄວາມສາມາດຂອງພຣະອົງໃນຊີວິດຂອງທ່ານເພື່ອທີ່ຈະ ຊ່ວຍແກ້ບັນຫາແລະຕອບສະໜອງຄວາມຕ້ອງການ ທຸກຢ່າງຂອງທ່ານ ພຣະເຈົ້າຊົງປະທານໃຫ້ທ່ານ ມີຄວາມເຊື່ອ ຫຼາຍພໍທີ່ຈະໄດ້ຮັບຄວາມພົ້ນ ແລະໂດຍຄວາມຮັກ ຂອງ ພຣະອົງກໍຊົງປະທານໃຫ້ທ່ານມີຄວາມເຊື່ອ ເພື່ອຮັບ ການຮັກສາໂລກ ແລະຄວາມເຊື່ອເພື່ອຮັບການລ້ຽງດູ ໃຫ້ພຣະອົງດ້ວຍ

ຖ້າຄວາມເຊື່ອທີ່ພຣະອົງຊົງປະທານເພື່ອໃຫ້ທ່ານ ໄດ້ຮັບຄວາມພົ້ນມີຫຼາຍພໍທີຈະເຮັດໃຫ້ທ່ານໄດ້ຮັບ ຄວາມພົ້ນ ຄວາມເຊື່ອອັນດຽວກັນນັ້ນກໍຍັງຢູ່ພາຍໃນ ຕົວທ່ານເພື່ອທີ່ຈະຊ່ວຍໃຫ້ທ່ານໄດ້ພົບກັບຄຳຕອບ ສຳລັບບັນຫາອື່ນໆໃນຊີວິດຂອງທ່ານ ຖ້າທ່ານເຊື່ອວ່າ ພຣະເຈົ້າຊົງຮັກທ່ານ ແລະເລີ່ມທີ່ຈະຮູ້ເຖິງຄວາມຮັກ ຂອງພຣະອົງຢ່າງແທ້ຈິງແລ້ວ ທ່ານກໍເລີ່ມໄວ້ວາງໃນໃນ ພຣະອົງຢ່າງແທ້ຈິງ ທ່ານຈະເລີ່ມໝັ້ນໃຈໃນຄວາມຈິງ

ແຫ່ງພະວັດຈະນະຂອງພຣະອົງທ່ານເລີ່ມຮູ້ວ່າພຣະອົງ ຈະບໍ່ມີວັນຕົວະທ່ານຢ່າງແນ່ນອນ ເພາະພຣະອົງຊົງຮັກທ່ານ

ຄຳວ່າ "ຄວາມເຊື່ອ" ຕາມຄວາມໝາຍໃນພຣະຄຳພີ ສະບັບຂະຫຍາຍຄວາມນັ້ນ ໝາຍເຖິງການທີ່ທ່ານ ຍອມເອົາຊີວິດ ທັງໝົດທຸກສ່ວນໄປເພິ່ງພາໃນພຣະອົງ (ພຣະເຈົ້າ) ໂດຍຄວາມໄວ້ວາງໃຈ ແລະຄວາມເຊື່ອໝັ້ນ ໃນລິດເດດໃນພຣະປັນຍາ ແລະຄວາມດີຂອງພຣະອົງ ຢ່າງສົມບູນແບບ (ກລຊ 1:4) ເມື່ອທ່ານຍອມໃຫ້ພຣະເຈົ້າ ຊົງຮັກທ່ານ ທ່ານກໍຈະເລີ່ມຮຽນຮູ້ ທີ່ຈະຮັກພຣະອົງ ແລະວາງໃຈໃນ ພຣະອົງ ແຕ່ທ່ານກໍຈະມີຄວາມເຊື່ອ

ພຣະເຈົ້າຮັກທ່ານ!

# 5

# ຫຼຸດພົ້ນຈາກຄວາມຢ້ານ

"ໃນຄວາມຮັກນັ້ນບໍ່ມີຄວາມຢ້ານ
ແຕ່ຄວາມຮັກທີ່ສົມບູນນັ້ນ
ກໍໄດ້ກໍາຈັດຄວາມຢ້ານເສຍ ເພາະຄາມຢ້ານ
ເຂົ້າກັບການລົງໂທດ ແລະຜູ້ທີ່ມີຄວາມຢ້ານ
ກໍບໍ່ມີຄວາມຮັກທີ່ສົມບູນ

1ຢຮ 4:18

ຕາມທໍາມະດາແລ້ວ ເຮົາມັກຈະດໍາເນີນໃນຄວາມເຊື່ອໄປດ້ວຍດີ ເຮົາໝັ້ນໃຈວ່າພຣະເຈົ້າຮັກເຮົາ ແລະໄວ້ວາງໃຈໃນພຣະອົງ ແຕ່ໃນທັນໃດນັ້ນ ມີເຫດການບາງຢ່າງເກີດຂຶ້ນເພື່ອໂຈມຕີເຮົາ

ສິ່ງທີ່ເປັນຕົວຂໍ້ລັກຄວາມເຊື່ອທີ່ໃຫຍ່ທີ່ສຸດຄືສະຖານະການແວດລ້ອມ ຄືເຫດການຮ້າຍແຮງຕ່າງໆທີ່ເກີດຂຶ້ນກັບຕົວເຮົາ ເຮົາບໍ່ຄ່ອຍມີບັນຫາປານໃດທີ່ຈະເຊື່ອວ່າພຣະເຈົ້າຮັກເຮົາ ຈົນກວ່າຈະມີເຫດການບາງຢ່າງ

ເກີດຂຶ້ນທີ່ເຮັດໃຫ້ເບິ່ງຄືວ່າພຣະອົງບໍ່ຮັກເຮົາ

ຈາກນັ້ນມັນກໍຈະແຊກເຂົ້າພ້ອມດ້ວຍຄວາມຢ້ານ ແລະຄວາມຮູ້ສຶກຕຳນິຕົນເອງເພື່ອແຍກເຮົາອອກໄປຈາກສິ່ງດຽວທີ່ເຮັດໃຫ້ເຮົາເປັນອິດສະລະໄດ້ຄືຄວາມຮັກຂອງພຣະເຈົ້າ "ເປັນຫຍັງຈຶ່ງມີເລື່ອງແບບນີ້ເກີດຂຶ້ນ? ມານຖາມ "ເຮົາເຄີຍຄິດວ່າ ພຣະເຈົ້າຮັກເຈົ້າ ແລ້ວເປັນຫຍັງເລື່ອງຮ້າຍໆ ຈຶ່ງເກີດຂຶ້ນກັບເຈົ້າໄດ້? ສົງໄສເຈົ້າຕ້ອງໄປເຮັດອັນໃດທີ່ບໍ່ດີມາຕິ ພຣະເຈົ້າຈຶ່ງຮ້າຍເຈົ້າປານນີ້"

ແລ້ວທ່ານກໍສູນເສຍຄວາມຮູ້ສຶກຄວາມໝັ້ນໃຈຕໍ່ພຣະພັກພຣະເຈົ້າໄປ ຖ້າເຮົາບໍ່ໝັ້ນໃຈເຮົາກໍຈະບັງຄັບໃຫ້ຕົນເອງໝັ້ນໃຈກໍບໍ່ໄດ້ ທ່ານຈະເຕັມໄປດ້ວຍຄວາມໝັ້ນໃຈຫຼືເຕັມໄປດ້ວຍຄວາມເຊື່ອກໍບໍ່ໄດ້ ຖ້າທ່ານບໍ່ຮູ້ວ່າພຣະເຈົ້າຊົງຮັກທ່ານ ແລະຖ້າທ່ານຍອມຮັບຄວາມຢ້ານ ແລະການຕຳນິຕົນເອງທີ່ມານໃສ່ ເຂົ້າມາໃນຄວາມຄິດ ທ່ານກໍຈະບໍ່ຮູ້ວ່າພຣະເຈົ້າຮັກທ່ານພຽງໃດ

ພຣະທຳ 1 ໂຢຮັນ 4:18 ກ່າວໄວ້ຢ່າງຊົງພະລັງວ່າ "ໃນຄວາມຮັກນັ້ນບໍ່ມີຄວາມຢ້ານ ຄວາມຮັກອັນຄົບບໍລິບູນກໍຂັບໄລ່ຄວາມຢ້ານອອກໄປ" ຂ້າພະເຈົ້າພະວະນະຂໍ້ພຣະຄຳພີນີ້ຢູ່ຫຼາຍຄັ້ງ ພະຍາຍາມທີ່ຈະທຳຄວາມເຂົ້າໃຈເຖິງຄວາມໝາຍໃນວິນຍານຂອງຂ້າພະເຈົ້າ ຄວາມຮັກອັນສົມບູນກຳຈັດຄວາມຢ້ານອອກໄປໄດ້ ພຣະເຈົ້າຄືຄວາມຮັກ

ອັນສົມບູນນັ້ນ ແລະຖ້າທ່ານຮູ້ວ່າຄວາມຮັກທີ່ພຣະເຈົ້າມີຕໍ່ທ່ານ ນັ້ນສົມບູນແບບພຽງໃດ ກໍຈະບໍ່ມີສິ່ງໃດອີກແລ້ວໃນໂລກນີ້ ທີ່ຈະເຮັດໃຫ້ທ່ານຢ້ານໄດ້ອີກ ເປັນໄປບໍ່ໄດ້ເລີຍທີ່ເຮົາຈະມີ ຄວາມຢ້ານຖ້າເຮົາໄດ້ຮັບການເປີດເຜີຍໃຫ້ເຫັນເຖິງຄວາມຮັກທີ່ພຣະເຈົ້າມີຕໍ່ເຮົາເປັນການສ່ວນຕົວ

ເປັນໄປບໍ່ໄດ້ທີ່ເຮົາຈະຢ້ານຄວາມຫຼົ້ມເຫຼວ ຖ້າເຮົາຮູ້ວ່າພຣະເຈົ້າຮັກເຮົາ ເຮົາຈະບໍ່ມີວັນຫຼົ້ມເຫຼວ ຖ້າເຮົາເພິ່ງພາໃນພຣະເຈົ້າ ທາງດຽວທີ່ຈະເຮັດໃຫ້ເຮົາລົ້ມເຫຼວກໍຄືເມື່ອເຮົາເພິ່ງພາໃນຕົນເອງ ຖ້າທ່ານຮູ້ວ່າພຣະເຈົ້າຊົງຮັກທ່ານ ທ່ານຈະບໍ່ມີວັນຢ້ານວ່າຈະລົ້ມເຫຼວ ຖ້າທ່ານຮູ້ວ່າພຣະເຈົ້າຮັກທ່ານ ທ່ານຈະບໍ່ມີວັນຢ້ານການຍອມຮັບຂອງຄົນອື່ນ

ຄວາມຮັກຂອງພຣະເຈົ້ານັ້ນມີພະລັງຫຼາຍຈົນສາມາດປົກຄຸມທຸກສິ່ງໄດ້ ທ່ານຄິດວ່າພຣະເຈົ້າອົງດຽວກັນທີ່ຊ່ວຍໄຖ່ທ່ານໃຫ້ພົ້ນແລະປົດປ່ອຍໃຫ້ທ່ານເປັນອິດສະລະແລ້ວຈະຊົງເອົາໂທດທ່ານແນວນັ້ນຫຼື? ຊາຕານນັ້ນແຫຼະຄືຜູ້ກ່າວໂທດ ສ່ວນພຣະເຈົ້ານັ້ນພຣະອົງຈະຊົງເຕືອນໃຫ້ທ່ານຮູ້ເຖິງບາບທີ່ມີຢູ່ໃນຊີວິດແລະພຣະອົງຈະຊົງສຳແດງໃຫ້ທ່ານພົບກັບທາງອອກ ສ່ວນມານມັນຈະກ່າວໂທດທ່ານແລະບອກວ່າບໍ່ມີທາງແກ້ໄຂໄດ້ອີກແລ້ວ

ພຣະຄຳພີສະບັບຂະຫຍາຍຄວາມແປພຣະທຳ ຂໍ້ນີ້ໄວ້ວ່າ "ບໍ່ມີຄວາມຢ້ານຢູ່ໃນຄວາມຮັກ (ຄວາມຮູ້ສຶກຫວັ່ນໄຫວບໍ່ໄດ້ດຳລົງຢູ່) ແຕ່ຄວາມຮັກທີ່ເຕີບໃຫຍ່ເຕັມທີ່ (ຄົບຖ້ວນສົມບູນແບບ) ນັ້ນບໍ່ໄດ້ຂັບໄລ່ຄວາມຢ້ານອອກຫວິດປະຕູໄປ ແລະກຳຈັດຮ່ອງຮອຍແຫ່ງຄວາມເປັນນຕາສະຍົດສະຫຍອງທຸກຢ່າງອອກໄປໝົດ ເພາະຄວາມຢ້ານນັ້ນ ເອົາຄວາມຄິດເລື່ອງການລົງໂທດຕິດຕົວມານຳ ດັ່ງນັ້ນຜູ້ທີ່ຍັງມີຄວາມຢ້ານຢູ່ກໍຍັງບໍ່ໄດ້ບັນລຸເຖິງ ຄວາມຮັກທີ່ເປັນຜູ້ໃຫຍ່ຢ່າງເຕັມທີແລ້ວ (ຍັງບໍ່ໄດ້ເຕີບໃຫຍ່ຈົນເຖິງພາວະຄວາມຮັກອັນສົມບູນແບບ)"

ຫຼາຍຄົນຄິດວ່າ ຂໍ້ພຣະຄຳຕອນນີ້ໝາຍຄວາມວ່າ ຖ້າທ່ານຮັກຂ້າພະເຈົ້າຫຼາຍພໍ ທ່ານກໍຈະບໍ່ຕ້ອງຢ້ານອີກຕໍ່ໄປ ແລະຖ້າທ່ານຮັກໃຜຈັກຄົນຫຼາຍພໍ ຄວາມຢ້ານກໍຈະອອກໄປຈາກຊີວິດທ່ານ ແຕ່ນັ້ນບໍ່ແມ່ນຄວາມໝາຍຂອງພຣະຄຳພີຕອນນີ້

ພຣະຄຳພີໝາຍຄວາມວ່າ ຖ້າທ່ານຍອມໃຫ້ພຣະເຈົ້າຮັກທ່ານ ທ່ານກໍຈະບໍ່ຕ້ອງຢ້ານອີກຕໍ່ໄປ ທ່ານຕ້ອງຍອມໃຫ້ພຣະເຈົ້າຮັກທ່ານ ຖ້າທ່ານບໍ່ຕ້ອງການທີ່ຈະມີຄວາມຢ້ານຢູ່ໃນຊີວິດອີກຕໍ່ໄປ ຈົ່ງຮັບເອົາຄວາມຮັກຂອງພຣະເຈົ້າໄວ້ສະຕອນນີ້ດ້ວຍຄວາມເຊື່ອ ເຊີນຮັບເຖີດ ຈົ່ງໄຂວ່ຄວ້າອອກໄປດ້ວຍຄວາມເຊື່ອເຊີນຮັບເຖີດ ຈົ່ງໄຂວ່ຄວ້າອອກໄປ

ດ້ວຍຄວາມເຊື່ອ ຮັບເອົາຄວາມຮັກທັງໝົດຂອງພຣະເຈົ້າເຂົ້າສູ່ຊີວິດທ່ານ

ຫຼັງຈາກທີ່ພຣະເຈົ້າປະທານການສຳແດງແກ່ຂ້າພະເຈົ້າ ໃນເລື່ອງຄວາມຮັກກຳຈັດຄວາມຢ້ານນີ້ແລ້ວ ຂ້າພະເຈົ້າມີເຫດການທີ່ຕ້ອງນຳບົດຮຽນນີ້ໄປໃຊ້ທັນທີ ເຮົາມີບັນຫາກັບລົດຂອງເຮົາມາໄລຍະໜຶ່ງແລ້ວ ເຮົາຄິດວ່າຄືຈະເປັນຍ້ອນສາຍພານມັນໝົດອາຍຸແລ້ວ ລົດເຮົາຕ້ອງໃຊ້ສາຍພານເສັ້ນໃຫຍ່ ຖ້າມັນໝົດອາຍຸແທ້ ແລະຕ້ອງປ່ຽນໃໝ່ຄົງຕ້ອງໃຊ້ເງິນປະມານ 400-500 ຫຼຽນ ຊຶ່ງຕອນນັ້ນເຮົາບໍ່ມີເງິນພໍ ຈຶ່ງຄິດທົນໃຊ້ໄປແນວນັ້ນໄປຊາມໆກ່ອນ

ໃນເຊົ້າມື້ນັ້ນ ພຣະເຈົ້າກ່າວໜູນໃຈຂ້າພະເຈົ້າວ່າ "ຈອຍຊ໌ ຂໍໃຫ້ເຈົ້າສະແດງຄວາມຮັກຕໍ່ເຮົາຕະຫຼອດວັນນີ້ ແລະຍອມໃຫ້ເຮົາຮັກເຈົ້າ ບໍ່ຕ້ອງເຮັດອັນໃດອື່ນອີກ ເຈົ້າບໍ່ເປັນຕ້ອງເປັນຕ້ອງເປັນສະຕຣີແຫ່ງຄວາມເຊື່ອ ສິ່ງທີ່ເຈົ້າຕ້ອງເຮັດກໍຄື ຂໍໃຫ້ເຈົ້າສະແດງຄວາມຮັກຕໍ່ເຮົາ ແລະຍອມໃຫ້ເຮົາຮັກເຈົ້າຕະຫຼອດເວລາ ຈົ່ງຍອມໃຫ້ເຮົາຮັກເຈົ້າ"

ດັ່ງນັ້ນ ຂ້າພະເຈົ້າຈຶ່ງຍ່າງໄປຮອບໆບໍລິເວນເຮືອນເສີມສ້າງຕົວເອງຂຶ້ນໃນຄວາມເຊື່ອອັນບໍລິສຸດ ຮ້ອງແລະປະດິດເພງໃໝ່ໆ ສັນລະເສີນພຣະເຈົ້າຢ່າງມີຄວາມສຸກ ໃນທັນໃດນັ້ນຂ້າພະເຈົ້າກໍໄດ້ຍິນສຽງຂອງສາມີດັງອອກມາ

ຈາກທາງໃນໂຮງຈອດລົດ ທີ່ຈິງເຂົາອອກໄປເຮັດວຽກເມື່ອ 45 ນາທີກ່ອນໜ້ານີ້ ແລ້ວເປັນຫຍັງຢູ່ໆເຖິງກັບມາຢູ່ທີ່ໂຮງລົດໄດ້ ເຂົາເປີດປະຕູເຮືອນເຂົ້າມາ ພ້ອມກັບເວົ້າວ່າ "ຂ້ອຍເຂົ້າເກຍອື່ນບໍ່ໄດ້ເລີຍນອກຈາກເກຍໜຶ່ງ ເລີຍຕ້ອງຂັບກັບມາ"

ຂ້າພະເຈົ້າເປີດປະຕູເຮືອນແລ້ວກໍເລີ່ມຫົວອອກມາ ຂ້າພະເຈົ້າບໍ່ໄດ້ຕັດສິນໃຈທີ່ຈະຫົວແຕ່ມັນອອກມາເອງ ມັນລົ້ນອອກມາຈາກວິນຍານຂອງຂ້າພະເຈົ້າ ແລະພຣະເຈົ້າຊົງສຳແດງໃຫ້ຮູ້ວ່າ ມັນເປັນຍ້ອນຂ້າພະເຈົ້າຍອມໃຫ້ພຣະອົງຮັກຂ້າພະເຈົ້າຕະຫຼອດເຊົ້ານັ້ນ ຂ້າພະເຈົ້າຈຶ່ງສາມາດຫົວໄດ້ ການທີ່ທ່ານຍອມໃຫ້ພຣະເຈົ້າຮັກທ່ານນັ້ນ ເປັນການເປີດປະຕູໃຫ້ຄວາມເຊື່ອເຮັດວຽກໃນຊີວິດທ່ານໄດ້ ຂ້າພະເຈົ້າຫົວອອກມາໄດ້ໂດຍຄວາມເຊື່ອ

ອັບລາຮາມກໍຫົວໄດ້ດ້ວຍຄວາມເຊື່ອ ເມື່ອພຣະເຈົ້າສະເດັດມາຫາທ່ານແລະແຈ້ງວ່າທ່ານຈະໄດ້ລູກຊາຍ ທ່ານກໍຫົວລໍກ່າວວ່າ "ສັນລະເສີນພຣະເຈົ້າ ຂ້າພຣະອົງເຊື່ອ" ສ່ວນຊາລານັ້ນ ຫົວລໍດ້ວຍຄວາມສົງໄສແລະບໍ່ເຊື່ອ ແລະພຣະເຈົ້າໄດ້ເຕືອນລາວ ແຕ່ພຣະອົງບໍ່ໄດ້ເຕືອນອັບລາຮາມ ທີ່ທ່ານຫົວມັນເປັນການຫົວດ້ວຍຄວາມເຊື່ອ

ເມື່ອມານເຂົ້າມາຕໍ່ຕ້ານທ່ານໂດຍການພະຍາຍາມເຮັດອັນໃດບາງຢ່າງທີ່ເບິ່ງແປກໆ ແລະໂງ່ງ່າວ ແລະທ່ານ

ຈະຮູ້ຈັກພຣະເຈົ້າຂອງທ່ານດີພໍ ທ່ານຈຶ່ງບໍ່ຮູ້ສຶກຢ້ານ ທ່ານກໍຈະຫົວອອກມາໄດ້ໂດຍຄວາມເຊື່ອ ທ່ານຮູ້ວ່າ ພຣະເຈົ້າຊົງຮັກທ່ານ ແລະພຣະອົງຈະຊົງປົກປ້ອງຄຸ້ມຄອງ ທ່ານໄວ້

ດັ່ງນັ້ນ ເມື່ອຂ້າພະເຈົ້າຫົວເລື່ອງສາຍພານລົດ ຂອງເຮົາ ພຣະເຈົ້າຈຶ່ງໄດ້ກ່າວດ້ວຍສຽງໃນໃຈແຜ່ວເບົາ ແຕ່ໜັກແໜ້ນແລະຊົງອຳນາດ ພຣະອົງກາວກັບຂ້າພະເຈົ້າ ສາມຄັ້ງວ່າ "ຈອຍຊ໌ ຖ້າເຈົ້າປະຕິບັດຕົນກັບເຮົາແນວນີ້ ເຮົາຈະບໍ່ເຮັດໃຫ້ເຈົ້າຜິດຫວັງເລີຍ" ສຽງນັ້ນຄືກັບວ່າຈະດັງ ກ້ອງໄປທົ່ວເຮືອນ "ເຮົາຈະບໍ່ເຮັດໃຫ້ເຈົ້າຜິດຫວັງເລີຍ"

ຖ້າທ່ານຍອມເພິ່ງພາໃນພຣະເຈົ້າແລະຍອມໃຫ້ ພຣະອົງຊົງຮັກທ່ານ ແລະທ່ານກໍຮັກພຣະອົງ ທ່ານກໍບໍ່ ຈຳເປັນຕ້ອງກະວົນເລື່ອງກາພະຍາມທີ່ຈະມີຄວາມເຊື່ອອີກ ຕໍ່ໄປ ພຽງແຕ່ທ່ານຍອມໃຫ້ພຣະເຈົ້າຮັກທ່ານແລະທ່ານ ຮັກພຣະອົງກໍຈະຊົງກະທຳໃຫ້ສຳເລັດເອງ ຄວາມຂອງ ພຣະເຈົ້າຈະລົ້ນໄຫຼອອກມາຈາກພາຍໃນຕົວທ່ານແລະ ຂັບໄລຄາມຢ້າທັງສິ້ນອອກໄປ

ພຣະເຈົ້າຮັກທ່ານ!

# 6

# ຄວາມຮັກຄືການໃຫ້

"ພະບັນຍັດນີ້ເຮົາທັງຫຼາຍກໍໄດ້ມາຈາກ
ພຣະອົງ ຄືວ່າໃຫ້ຄົນທີ່ຮັກພຣະເຈົ້ານັ້ນ
ຮັກພີ່ນ້ອງຂອງຕົນເໝືອນກັນ"

1 ໂຢຮັນ 4:21

ທ່ານເປັນລູກຄົນພິເສດຂອງພຣະເຈົ້າ ພຣະເຈົ້າກ່າວເຊັ່ນນັ້ນ ພະບັນຍັດສອງ 7:6 ຖ້າທ່ານຈະເລີ່ມປະພຶດຕາມຄວາມຈິງຂໍ້ນີ້ ຊີວິດທ່ານກໍຈະປ່ຽນໂລກໄດ້ ທ່ານຈະໄປໃນຊຸບເປີ້ມາເກັດເທິງໃບໜ້າ ຈັບເອົາລໍ້ຍູ້ແລ້ວເວົ້າວ່າ "ທຸກສິ່ງທີ່ມືຂ້ອຍແຕະຕ້ອງກໍໄດ້ຮັບພອນ ອາເລລູຢາ! ຜູ້ຄົນເຫຼົ່ານີ້ໄດ້ຮັບພອນ ເພາະຂ້ອຍຢູ່ໃນຮ້ານນີ້ວັນນີ້ ສັນລະເສີນພຣະເຈົ້າ! "ໃຫ້ຍ່າງຜິວປາກແລະຮື່ມເປັນເພງໄປທົ່ວຮ້ານເປັນຄົນພິເສດໃນທຸກທີ່ ທີ່ທ່ານໄປ

ບາງເທື່ອເຮົາມັກເຮັດຫຍັງແບບນີ້ລະ ທ່ານພ້ອມຫຼືຍັງທີ່ຈະຄວ້າໄຊຊະນະ? ຈົ່ງຍື່ນມືອອກໄປໃນວິນຍານແລ້ວ

ຄວ້າເອົາໄຊຊະນະໄວ້ແລ້ວເວົ້າວ່າ "ເຈົ້າມານຮ້າຍເຈົ້າເຮັດໃຫ້ເຮົາຫົວປັ່ນ ດ້ວຍການຫຼອກລວງແລະຄວາມຢ້ານມາດົນນານພໍແລ້ວ ເຮົາເປັນຄົນພິເສດ ແລະເຮົາກໍຈະມີໄຊຊະນະໃນພຣະນາມຂອງພຣະເຢຊູຄຣິສ ເພາະພຣະເຈົ້າຊົງຮັກເຮົາແລະເຈົ້າບໍ່ມີທາງຂັດຂວາງເຮົາໄດ້"

ຄວາມຮັກຂອງພຣະເຈົ້າທີ່ຢູ່ໃນຕົວທ່ານຈະເຮັດໃຫ້ທ່ານໄດ້ຮັບການປົດປ່ອຍຈາກຄວາມຢ້ານ ທ່ານຈະບໍ່ຢ້ານທີ່ຈະມອບຄວາມຮັກໄປສູ່ຜູ້ອື່ນ ພຣະເຈົ້າຕ້ອງການໃຫ້ທ່ານເຊື່ອທີ່ພຣະອົງກ່າວວ່າພຣະອົງຈະທຳການຍິ່ງໃຫຍ່ກວ່າຜ່ານທາງທ່ານ ເພາະພຣະເຢຊູຄຣິສໄດ້ສະເດັດໄປຫາພຣະບິດາແລ້ວ ທ່ານເຊື່ອແທ້ຫຼືບໍ່ວ່າພຣະເຈົ້າຈະໃຊ້ຊີວິດທ່ານ? ພຣະເຈົ້າຈະປະທານສິ່ງຕ່າງໆໃຫ້ແກ່ທ່ານຕາມທີ່ທ່ານເຊື່ອ ຢ່າຢ້ານທີ່ຈະກ້າວໄປດ້ວຍຄວາມເຊື່ອ

ຂ້າພະເຈົ້າບອກທ່ານບໍ່ໄດ້ອີກຊໍ້າວ່າມີຈັກເທື່ອຕໍ່ຈັກເທື່ອທີ່ຂ້າພະເຈົ້າປຽບເໝືອນຢືນຢູ່ເທິງໜ້າຜາແຫ່ງຄວາມເຊື່ອ ຄືຢູ່ໃນພາວະທີ່ຕ້ອງຕັດສິນໃຈເຮັດໃນສິ່ງທີ່ເບິ່ງເປັນຕາຢ້ານ ແລະພຣະເຈົ້າກໍກ່າວວ່າ "ມາລີ ຈອຍຊ໌ ເຮົາຈະເຮັດສິ່ງທີ່ຍິ່ງໃຫຍ່ຜ່ານທາງເຈົ້າ ມາເທາະ" ແລະຂ້າພະເຈົ້າກໍກະໂດດເຂົ້າໄປເຮັດສິ່ງນັ້ນໆ ແລະພຣະເຈົ້າບໍ່ເຄີຍປ່ອຍໃຫ້ຂ້າພະເຈົ້າລົ້ມລະລາຍເລີຍ ແມ່ນແຕ່ເທື່ອດຽວ

ທ່ານຮູ້ບໍວ່າເປັນຫຍັງຂ້າພະເຈົ້າຈຶ່ງບໍ່ຕ້ອງກະວົນວ່າຈະຕ້ອງລົ້ມລະລາຍເມື່ອຕັດສິນໃຈ ເຮັດສິ່ງໃດໂດຍຄວາມເຊື່ອ? ກໍຍ້ອນຂ້າພະເຈົ້າຮູ້ວ່າພຣະເຈົ້າຊົງຮັກຂ້າພະເຈົ້າ ແລະພຣະອົງຊົງຮູ້ວ່າ ຂ້າພະເຈົ້າກໍຮັກພຣະອົງ ແລະຂ້າພະເຈົ້າໄດ້ມອບຖະຫວາຍຊີວິດໃຫ້ພຣະອົງແລ້ວ ໂດຍພຣະຄຸນຂອງພຣະອົງ ຖ້າທ່ານໄດ້ເຮັດແນວນັ້ນແລະທ່ານຮັກພຣະເຈົ້າແລະພຣະອົງຮັກທ່ານແລ້ວ ກໍຈະບໍ່ມີບັນຫາໃດໃນໂລກນີ້ອີກແລ້ວທີ່ທ່ານເອົາຊະນະບໍ່ໄດ້

"ແລ້ວໃຜຈະໃຫ້ເຮົາທັງຫຼາຍຂາດຈາກຄວາມຮັກຂອງພຣະຄຣິສໄດ້ ຈະເປັນຄວາມທຸກຫຼືຄວາມຍາກລຳບາກ ຫຼືການຂົ່ມເຫັງ ຫຼືການກັນດານອາຫານ ຫຼືການເປືອຍກາຍ ຫຼືການຖືກໂພຍໄພ ຫຼືການຖືກຄົມດາບຫຼື

ຕາມທີ່ຂຽນໄວ້ໃນພຣະຄຳພີວ່າ ເພາະເຫັນແກ່ພຣະອົງ ຂ້າພະອົງຈຶ່ງຖືກປະຫານບໍ່ມີໃດກໍມື້ໜຶ່ງ ແລະນັບວ່າເປັນແກະສຳລັບເອົາໄປຂ້າ

ແຕ່ວ່າໃນເຫດການທັງປວງເຫຼົ່ານີ້ ເຮົາມີໄຊເຫຼືອລົ້ນໂດຍພຣະອົງຜູ້ໄດ້ຊົງຮັກເຮົາທັງຫຼາຍ

ເພາະຂ້າພະເຈົ້າເຊື່ອໝັ້ນວ່າ ແມ່ນຄວາມຕາຍຫຼືຊີວິດ ຫຼືບັນດາທູດສະຫວັນ ຫຼືເທບພຣະເຈົ້າ ຫຼືສິ່ງຊຶ່ງມີຢູ່ໃນປະຈຸບັນນີ້ ຫຼືສິ່ງຊຶ່ງມີຢູ່ໃນພາຍໜ້າ ຫຼືລິດເດດທັງຫຼາຍ

ຫຼືສິ່ງສູງ ສິ່ງເລິກ ຫຼືສິ່ງໃດໆອື່ນທີ່ໄດ້ຊົງສ້າງ ແລ້ວນັ້ນ ຈະບໍ່ສາມາດກະທຳໃຫ້ເຮົາທັງຫຼາຍຂາດຈາກຄວາມຮັກ ຂອງພຣະເຈົ້າ ຊຶ່ງມີຢູ່ໃນພຣະເຢຊູຄຣິສອົງພຣະຜູ້ເປັນ ເຈົ້າຂອງເຮົາໄດ້

ໂລມ 8:35-39

ທ່ານອາດຈະຄິດບໍ່ອອກວ່າ ພຣະເຈົ້າຢາກໃຫ້ທ່ານ ມີເສລີພາບພຽງໃດ ພຣະເຈົ້າຊົງເຈັບປວດເມື່ອເຫັນທ່ານ ບໍ່ມີຄວາມສຸກ ໃນບາງເທື່ອທ່ານຕື່ນຂຶ້ນມາແລະອາລົມເສຍ ຕະຫຼອດ ໝົດມື້ ເຄີຍເປັນແນວນີ້ແມ່ນບໍ? ອາລະວາດ ເຕະແມວ ຮ້ອງໃສ່ເດັກນ້ອຍ ຊັງເພື່ອນບ້ານ ອາລົມກໍເສຍ ແລະໜ້າຕາບູດບຶ້ງ “ຊີວິດຂ້ອຍກໍມີແຕ່ເຮັດວຽກໆໆ ແຕ່ກໍບໍ່ມີໃຜພໍສິມາປະທັບໃຈ”

ຂ້າພະເຈົ້າຮູ້ວ່າທ່ານປະພຶດແນວໃດ ເພາະວ່າ ຂ້າພະເຈົ້າເອງກໍເຄີຍເຮັດແນວນັ້ນດ້ວຍ ເມື່ອລູກໆກັບ ມາຮອດເຮືອນ ທ່ານກໍຈົ່ມວ່າ “ເດັກນ້ອຍ ພວກນີ້ ເປັນຕາລຳຄານແທ້ ເປັນຫຍັງບໍ່ຢູ່ໂຮງຮຽນມື້ໜຶ່ງຈັກສິບສີ່ ຊົ່ວໂມງ ຄືເປັນເຈັດຊົ່ວໂມງ?”

ທ່ານຮູ້ບໍ່ວ່ານັ້ນເປັນການເຮັດໃຫ້ພຣະເຈົ້າ ເສຍພະໄທ? ຂ້າພະເຈົ້າບໍ່ໄດ້ພະຍາຍາມເຮັດໃຫ້ທ່ານເກີດ ຄວາມຮູ້ສຶກບໍ່ດີ ແຕ່ຢາກໃຫ້ທ່ານເຂົ້າໃຈວ່າ ຖ້າທ່ານເຊື່ອວ່າ

ພຣະເຈົ້າຊົງຮັກທ່ານ ທ່ານກໍຈະເລີ່ມຕອບສະໜອງກັບຄວາມຮັກນັ້ນ ຈາກນັ້ນທ່ານກໍຈະເຕັມໄປດ້ວຍຄວາມຮັກຈົນມັນລົ້ນໄຫຼໄປສູ່ຄົນອື່ນ ທ່ານຈະເປັນຄົນອ່ອນຫວານແລະເຕັມໄປດ້ວຍຜົນຂອງຄວາມເມດຕາປານີ

ຖ້າທ່ານສາມາດຊາບຊຶ້ງໃນຄວາມຈິງທີ່ວ່າ ພຣະເຈົ້າຊົງຮັກທ່ານແລ້ວທ່ານຈະໄດ້ຮັບການປຽວຢາຮັກສາຊີວິດກໍຈະເຕັມໄປດ້ວຍຄວາມມັ້ງຄັ້ງ ບັນຫາຫຼືຄວາມຕ້ອງການຕ່າງໆກໍຈະໄດ້ຮັບການແກ້ໄຂທ່ານຈະເລີ່ມໄດ້ພົບຄວາມຜ່ອນຄາຍໃນຊີວິດ

ເຫດຜົນຫຼັກທີ່ພຣະເຈົ້າບໍ່ສາມາດປະທານສິ່ງທີ່ຊົງປະສົງຈະປະທານໃຫ້ແກ່ເຮົາໄດ້ທຸກສິ່ງ ກໍຍ້ອນວ່າເຮົາມົວແຕ່ສາລະວົນດີ້ນລົນທີ່ຈະໄດ້ສິ່ງເຫຼົ່ານັ້ນ ພຣະອົງບໍ່ສາມາດທີ່ຈະເຮັດໃຫ້ເຮົາສະຫງົບໄດ້ດົນພໍທີ່ຈະເທພຣະອົນມາເໜືອຊີວິດຂອງເຮົາໄດ້ພຣະເຈົ້າຕ້ອງການໃຫ້ທ່ານພັກພິງໃນພຣະອົງ ແລະສະແດງຄວາມຮັກຕໍ່ພຣະອົງ ພຣະອົງຕ້ອງການໃຫ້ທ່ານເປີດຍອມໃຫ້ພຣະອົງຮັກທ່ານແລະຮັບເອົາຄວາມຮັກນັ້ນໄວ້

ມານຮ້າຍຈະຢຸດຢັ້ງການລົ້ນໄຫຼຂອງຄວາມຮັກບໍ່ໄດ້ຖ້າທ່ານເປັນຄົນທີ່ມີຄວາມຮັກ ເພາະຖ້າຫາກທ່ານເປັນຜູ້ມີຄວາມຮັກແລ້ວ ທ່ານກໍຈະເປັນຄົນທີ່ຮູ້ຈັກການໃຫ້ທ່ານຈະຮັກໂດຍທີ່ບໍ່ມີການໃຫ້ບໍ່ໄດ້

ຕອນທ້າຍຂອງຂໍ້ພຣະຄຳບັນຍັດສອງ 7:6 ສະບັບຂະຫຍາຍຄວາມໄດ້ກ່າວໄວ້ວ່າ “ພຣະຢາໂຮວາພຣະເຈົ້າຂອງທ່ານ ຊົງເລືອກທ່ານໃຫ້ມາເປັນຊາດພິເສດຂອງ. ພຣະອົງ” ພຣະເຈົ້າໄດ້ຊົງເອີ້ນທ່ານແລ້ວ ຕອນນີ້ວຽກຫຼັກຂອງທ່ານ ອາດຈະເປັນການເຮັດວຽກກັບຄອບຄົວຂອງຕົນຢູ່ກັບເຮືອນ ແຕ່ພຣະເຈົ້າກໍໄດ້ຊົງເອີ້ນທ່ານເຊັ່ນກັນ ຖ້າທ່ານຢາກໃຫ້ພຣະເຈົ້າໃຊ້ຊີວິດຂອງທ່ານແທ້ໆ ພຣະເຈົ້າກໍຈະຊົງໃຊ້ຊີວິດຂອງທ່ານແທ້ໆ ແຕ່ທ່ານຕ້ອງຈັດການວາງຮາກຖານໃນເລື່ອງນີ້ເສຍກ່ອນ ທ່ານຕ້ອງຮູ້ວ່າພຣະເຈົ້າຊົງຮັກທ່ານ

ຈົ່ງຢ່າທຸ້ມເທພະລັງຝ່າຍວິນຍານທັງໝົດຂອງທ່ານໄປຈົດຈໍ່ຢູ່ແຕ່ກັບບັນຫາແລະຜົນປະໂຫຍດຂອງຕົວເທົ່ານັ້ນໃຫ້ທ່ານທູນບັນຫາແລະຄວາມຕ້ອງການຂອງຕົວເອງຕໍ່ພຣະເຈົ້າຢ່າງກະຊັບແລະວ່ອງໄວ ຈາກນັ້ນກໍພັດທະນາຄວາມເຊື່ອຂອງຕົນຂຶ້ນ ເພື່ອຊ່ວຍແບກພາລະບັນຫາຂອງຄົນອື່ນໆ ພຣະເຢຊູໄດ້ຊົງອະທິຖານແລະສະແຫວງຫາພະພັກຂອງພຣະບິດາເພື່ອຮັບການເສີມສ້າງ ເພື່ອຈະໄດ້ອອກໄປຊ່ວຍແກ້ໄຂບັນຫາແກ່ຄົນທັງຫຼາຍທີ່ມາຟັງພຣະອົງໄດ້

ຈາກນັ້ນພຣະອົງກໍປະກາດສັ່ງສອນພະທຳຂອງພຣະເຈົ້າແກ່ພວກເຂົາ ວາງມືອະທິຖານເພື່ອເຂົາ ແລະ

ພວກເຂົາກໍເຊົາໂລກຢ່າງອັດສະຈັນ ພຣະອົງບໍ່ໄດ້ມີວແຕ່ພະຍາຍາມໃຊ້ຄວາມເຊື່ອ ທູນຂໍນັ້ນຂໍມີຈາກພຣະເຈົ້າເພື່ອພຣະອົງເອງ ເຮົາຈໍາເປັນທີ່ເຮົາຈະທູນຕໍ່ພຣະເຈົ້າໃນສິ່ງທີ່ເຮົາຕ້ອງການ ເປັນການທູນເພື່ອໃຫ້ພຣະອົງຊົງຊາບ ແຕ່ໃຈປາດຖະໜາຫຼັກຂອງເຮົານັ້ນ ຄວນຈະຢູ່ທີ່ການຊ່ວຍເຫຼືອ ໃນພາວະບັນຫາແລະຄວາມຕ້ອງການຂອງຜູ້ອື່ນ

ຄວາມໝາຍທີ່ແທ້ຈິງຂອງຄໍາວ່າ ຮັ່ງມີ ນັ້ນຄືການມີຄວາມສາມາດທີ່ຈະໃຊ້ລິດເດດຂອງພຣະເຈົ້າໃນການແກ້ໄຂບັນຫາແລະຕອບສະໜອງຄວາມຕ້ອງການທີ່ທ່ານປະເຊີນຢູ່ ການມີຄວາມຮັກຂອງພຣະເຈົ້າຈະເຮັດໃຫ້ທ່ານສາມາດທີ່ຈະໃສ່ໃຈໃນຄວາມຕ້ອງການຂອງຜູ້ອື່ນກ່ອນຄວາມຕ້ອງການຂອງຕົນເອງ ທ່ານຄິດວ່າພຣະເຈົ້າຊົງຮັກທ່ານຫຼາຍພໍ ຈົນເຮັດໃຫ້ທ່ານສາມາດທີ່ຈະຍື່ນຄວາມຮັກໃຫ້ແກ່ຄົນທີ່ບໍ່ໜ້າຮັກ ຄົນທີ່ໜ້າບູດບຶ້ງແລະບໍ່ເປັນຕາປະທັບໃຈແມ່ນບໍ?

ການທີ່ຈະຮັກຄົນທີ່ຮັກເຮົານັ້ນ ບໍ່ຕ້ອງໃຊ້ຄວາມພະຍາຍາມອັນໃດເລີຍ ແມ່ນແຕ່ຄົນບາບກໍເຮັດໄດ້ ແຕ່ຖ້າທ່ານຮັກຄົນທີ່ບໍ່ໜ້າຮັກ ພະຍາຍາມທີ່ຈະຮັກເຂົາ ແລະຮັກຕໍ່ໄປເລື້ອຍໆ ແລະຮັກຕໍ່ໄປເລື້ອຍໆ ຄວາມຮັກຂອງພຣະເຈົ້າກໍຈະປ່ຽນແປງຊີວິດຂອງເຂົາ

ອາດຈະໃຊ້ເວລາເປັນປີ ຫ້າປີ ຫຼືຊາວຫ້າປປີ ແຕ່ມັນກໍຄຸ້ມຄ່າ ດົນປານໃດທີ່ພຣະເຢຊູຄຣິສຄອຍຖ້າທ່ານ?

ພຣະເຈົ້າຊົງຮັກທ່ານ! ແລະພຣະອົງກໍຮັກຄົນອື່ນທີ່ຢູ່ອ້ອມຂ້າງທ່ານດ້ວຍ ບໍ່ວ່າເຂົາຈະພົ້ນແລ້ວຫຼືຍັງເປັນຄົນບາບຢູ່ກໍຕາມ ພຣະອົງຊົງຮັກພວກເຂົາ ແລະພຣະອົງຕ້ອງການໃຫ້ທ່ານເປັນຊ່ອງທາງທີ່ຈະສຳແດງຄວາມຮັກຂອງພຣະອົງໃຫ້ແກ່ພວກເຂົາ

ຢ່າຢ້ານທີ່ຈະກ້າວອອກໄປ ຄວາມຮັກຂອງພຣະເຈົ້າ ເຮັດໃຫ້ທ່ານຫຼຸດພົ້ນຈາກຄວາມຢ້ານແລະຄວາມຮູ້ສຶກຕຳນິຕົນເອງແລ້ວ ແລະພຣະອົງຊົງປະທານຄວາມສາມາດ ທີ່ຈະຮັກໃຫ້ແກ່ທ່ານແລ້ວ ຈົ່ງມຸ້ງໝັ້ນທີ່ຈະແບ່ງປັນຄວາມຮັກຂອງພຣະເຈົ້າໄປສູ່ຄົນທົ່ວໄປເລີ່ມຕົ້ນດ້ວຍການສະແດງຄວາມເປັນມິດກ່ອນ ພະຍາຍາມສ້າງນິໄສທີ່ຜູກມິດແລະເປັນພຣະພອນແກ່ຄົນອື່ນໃນພຣະກາຍຂອງພຣະຄຣິສ ທ່ານອາດຈະເຊີນຄົນມາຮັບປະທານອາຫານແລງ ຫຼືມາຢ້ຽມຢາມຢູ່ເຮືອນ ຈັບມືທັກທາຍໝູ່ຄູ່ດ້ວຍຮອຍຍິ້ມ ພຣະເຈົ້າຊົງມີງານບາງຢ່າງໃຫ້ທ່ານເຮັດ ພຣະອົງປະສົງຈະໃຊ້ທ່ານ ໃຫ້ເຮັດໃນສິ່ງທີ່ພຣະອົງໃຊ້ຄົນອື່ນບໍ່ໄດ້

ມີຫຼາຍຄົນທີ່ມີບັນຫາພິເສດ ຊຶ່ງມີແຕ່ທ່ານພຽງຄົນດຽວເທົ່ານັ້ນທີ່ຈະຊ່ວຍເຫຼືອໃນບັນຫາ

ຂອງເຂົາໄດ້ ຈຶ່ງທູນຂໍໃຫ້ພຣະເຈົ້າສໍາແດງວິທີການ ທີ່ຈະຊ່ວຍເຫຼືອເຂົາ ດ້ວຍຄວາມຮັກຂອງພຣະອົງແລະ ພຣະອົງຈະຊົງສອນທ່ານ

ພຣະເຈົ້າຊົງຮັກທ່ານ!

# 7

# ຄວາມຮັກຂອງພຣະເຈົ້າ ຈະປ່ຽນແປງຊີວິດທ່ານ

"ຄວາມຮັກທີ່ຂ້າພະເຈົ້າເວົ້າເຖິງນີ້ບໍ່ແມ່ນທີ່ເຮົາ
ຮັກພຣະເຈົ້າ ແຕ່ພຣະອົງຊົງຮັກເຮົາແລະຊົງໃຊ້
ພຣະບຸດຂອງພຣະອົງມາເພື່ອເປັນເຄື່ອງບູຊາ
ເພື່ອໄຖ່ບາບກຳຂອງພວກເຮົາ"

1ໂຢຮັນ 4:10

ພຣະເຈົ້າຊົງຮັກທ່ານ ແຕ່ຂ້າຄິດວ່າຄືສິບໍ່ມີຫຼາຍຄົນປານໃດ ທີ່ຈະຊາບຊຶ້ງເຖິງຄວາມຮັກທີ່ພຣະອົງມີຕໍ່ເຮົາ ພຣະເຈົ້າໄດ້ຊົງສຳແດງໃຫ້ຂ້າພະເຈົ້າເຫັນເມື່ອສຶກສາພຣະທຳເລື່ອງນີ້ວ່າ ຖ້າເຮົາຮູ້ຢ່າງແທ້ຈິງໃນວິນຍານຂອງເຮົາວ່າພຣະເຈົ້າຮັກເຮົາຫຼວງຫຼາຍຂະໜາດໃດ ແລ້ວເຮົາຈະສາມາດຢືນໄດ້ຢ່າງສະງ່າງາມ ເຫັນໄດ້ເຖິງຄວາມແຕກຕ່າງກັບສິ່ງທີ່ເຮົາເຄີຍເປັນຢູ່ແຕ່ກ່ອນ

ຈົ່ງອ້ອນວອນພະວັນນາເຖິງຄວາມຮັກຂອງພຣະເຈົ້າ ທີ່ມີຕໍ່ທ່ານ ນັ້ນຄືສິ່ງທີ່ປ່ຽນຊີວິດຂອງທ່ານໄດ້ ຖ້າທ່ານ ບໍ່ມັກນິດໄສບາງຢ່າງຂອງຕົວເອງ ການທີ່ທ່ານຮູ້ແທ້ວ່າ ພຣະເຈົ້າຮັກທ່ານນັ້ນ ຊ່ວຍປ່ຽນແປງທ່ານໄດ້

ເມື່ອທ່ານຮູ້ວ່າມີໃຜບາງຄົນຮັກທ່ານ ທ່ານຮູ້ສຶກ ແນວໃດແດ່? ມັນເຮັດໃຫ້ທ່ານຮູ້ສຶກເປັນສຸກແມ່ນບໍ? ທ່ານຮູ້ສຶກວ່າຕົວເອງໜ້າລັງກຽດບໍ? ພຣະເຈົ້າກ່າວກັບ ຂ້າພະເຈົ້າວ່າ ລາງຄົນທີ່ອ່ານໜັງສືເຫຼັ້ມນີ້ເປັນຄົນທີ່ ຊັງຕົວເອງ ທ່ານຊັງສິ່ງທີ່ຕົວເອງເຮັດ ແລະບໍ່ຍອມຮັບວ່າ ຕົວເອງເປັນຄົນທີ່ຖືກສ້າງຂຶ້ນໃໝ່ແລ້ວ ທ່ານຮູ້ສຶກວ່າຕ້ອງ ຕໍ່ສູ້ກັບນິໄສເກົ່າໆຢູ່ຕະຫຼອດເວລາ

ເມື່ອໃດທີ່ທ່ານຍັງດຳລົງຊີວິດໂດຍຮູ້ສຶກວ່າຕົວເອງ ໃຊ້ບໍ່ໄດ້ຢູ່ຕະຫຼອດເວລາ ຮູ້ສຶກບໍ່ມັກຕົວເອງ ຊັງຕົວເອງ ບໍ່ຄຳນຶງວ່າຕົວເອງມີຄ່າພຽງໃດ ທ່ານກໍບໍ່ມີວັນປະພຶດຕົວ ແບບຄົນມີຄ່າໄດ້ ພຣະຄຳພີກ່າວວ່າ “ຍ້ອນ ເຂົາຄິດວ່າ ຕົວເອງເປັນແນວໃດ ເຂົາກໍເປັນຄົນແນວນັ້ນ” (ສຸພາສິດ 23:7 ສະບັບຂະຫຍາຍຄວາມ) ທັງໝົດນີ້ເປັນຍ້ອນທ່ານ ບໍ່ໄດ້ຊຶມຊັບກັບຄວາມຈິງທີ່ວ່າພຣະເຈົ້າຮັກທ່ານນັ້ນເອງ ການທີ່ເຮົາຮູ້ວ່າພຣະເຈົ້າຊົງຮັກເຮົາພຽງໃດນັ້ນ ເປັນສິ່ງທີ່ ຊົງພະລັງຢ່າງຍິ່ງ

ພຣະເຈົ້າປະສົງໃຫ້ທ່ານເຂົ້າເຝົ້າພຣະອົງເປັນການ

ສ່ວນຕົວທຸກວັນ ນັ້ນແຫຼະຄືສິ່ງທີ່ປ່ຽນຊີວິດຂອງທ່ານ ຖ້າທ່ານບໍ່ຕັ້ງພຣະເຈົ້າໃຫ້ເປັນທີໜຶ່ງ ກໍເທົ່າກັບວ່າທ່ານຕັ້ງພຣະອົງໄວ້ໃນຕຳແໜ່ງທີເຮັດໃຫ້ພຣະອົງບໍ່ສາມາດເຮັດຫຍັງເພື່ອທ່ານໄດ້ເທົ່າທີ່ພຣະອົງປະສົງຈະກະທຳ ສິ່ງທີ່ຈະເຮັດໃຫ້ທ່ານຈະເລີນຂຶ້ນຈະເລີນຂຶ້ນແລະເຂັ້ມແຂງໃນຝ່າຍວິນຍານໄດ້ຄືການໃຊ້ເວລາເປັນສ່ວນຕົວກັບພຣະເຈົ້າເພື່ອສະແດງຄວາມຮັກຕໍ່ພຣະອົງ ແລະຍອມໃຫ້ພຣະອົງຊົງຮັກທ່ານ

ໝູ່ຄົນສ່ວນໃຫຍ່ມັກຂີ້ຄ້ານ ແລະບໍ່ຍອມເຮັດແນວນັ້ນ ເຂົາຢາກໃຫ້ຄົນອື່ນເຮັດແທນເຂົາ ຢ່າຫາຂໍ້ແກ້ຕົວຖ້າໃຜອ່ານໜັງສືເຫຼັ້ມນີ້ແລະຍັງບໍ່ໄດ້ໃຊ້ເວລາສາມັກຄີທຳກັບພຣະເຈົ້າພໍປານໃດ ແລ້ວເກີດຄວາມຮູ້ສຶກວ່າຕົນເອງຜິດ ຈະມີມານມາຊິມບອກເຂົາວ່າ "ກະເຈົ້າຍັງມີວຽກຕ້ອງເຮັດອີກຫຼາຍຢ່າງ"

ຂ້າພະເຈົ້າຮູ້ດີວ່າ ເລື່ອງມັນຈະເປັນໄປແນວໃດມານຈະຄອຍສະເໜີຂໍ້ແກ້ຕົວເລື່ອງນັ້ນເລື່ອງນີ້ໃຫ້ທ່ານຢູ່ສະເໝີ ຂໍໃຫ້ຕັ້ງອົກຕັ້ງໃຈກັບພຣະເຈົ້າແລະຮ້ອງຮຽກພຣະອົງ ພຣະວັດຈະນະຂອງພຣະເຈົ້າ ແລະການໃຊ້ເວລາສາມັກຄີທຳກັບພຣະອົງຄືສິ່ງທີ່ປ່ຽນຊີວິດທ່ານໄດ້

ພຣະເຈົ້າຊົງສ້າງທ່ານຂຶ້ນມາເພື່ອໃຫ້ມີຄວາມສາມາດໂປໂລກ່າວໄວ້ໃນພຣະທຳຟີລິບປອຍ4:13ວ່າ ຂ້າພະເຈົ້າ

ສູ້ກັບທຸກສິ່ງໄດ້ໂດຍ ພຣະເຈົ້າເປັນຜູ້ຊູກຳລັງຂ້າພະເຈົ້າ" ຫຼືກ່າວອີກແນວໜຶ່ງ ຄືບໍ່ມີຈັກສິ່ງດຽວໃນຈັກກະວານນີ້ ທີ່ທ່ານຈະເຮັດບໍ່ໄດ້ ເມື່ອອາໄສລິດເດດຂອງພຣະເຢຊູຄຣິສ ເມື່ອພຣະເຈົ້າຊົງສຳແດງໃຫ້ທ່ານເຫັນບັນຫາໃນເລື່ອງໃດ ທ່ານຕ້ອງຟ້າວຈັດການແກ້ໄຂທັນທີໂດຍອາໄສລິດເດດ ແລະໄຊຊະນະ ຖ້າທ່ານຢືນຂຶ້ນແລະຮັບເອົາຄວາມຮັກຂອງພຣະເຈົ້າ ແລະປະຕິເສດບໍ່ຍອມຟັງຄຳຫຼອກລວງຂອງມານສິກກະປິກ ທີ່ຄອຍບອກທ່ານວ່າທ່ານບໍ່ດີ ແລະແຫຼກເຫຼວພຽງໃດ ແລ້ວທ່ານກໍຈະເລີ່ມດຳເນີນຊີວິດຢ່າງມີໄຊຊະນະໄດ້ ຕອນນີ້ທ່ານອາດປະພຶດຕົວບໍ່ຄ່ອຍດີ ແຕ່ທ່ານສາມາດເຮັດໃນສິ່ງທີ່ແຕກຕ່າງອອກໄປໄດ້ ຖ້າທ່ານຍອມເຊື່ອວ່າຕົວຕົນພາຍໃນຂອງທ່ານໄດ້ຖືກສ້າງຂຶ້ນໃໝ່ແລ້ວ ທ່ານຈະບໍ່ມີທາງທີ່ຈະປ່ຽນແປງການກະທຳຂອງຕົວເອງໄດ້ເລີຍແມ່ນແຕ່ໜ້ອຍດຽວ ຈົນກວ່າທ່ານຈະສາມາດຢືນຂຶ້ນແລະເວົ້າກັບຕົວເອງໄດ້ວ່າ "ຂອບຄຸນພຣະເຈົ້າ ຂ້ອຍເປັນຄົນພິເສດ ຂ້ອຍເປັນຄົນບໍລິດ ພຣະເຈົ້າຮຊົງເອກຂ້ອຍໄວ້ແລ້ວ ພຣະອົງຊົງຊຳລະຂ້ອຍແລ້ວໂດຍພຣະໂລຫິດຂອງພຣະເມສານ້ອຍ ຂ້ອຍຈະປະພຶດຕົວແນວນັ້ນ ເຈົ້າຊາຕານ ຂ້ອຍບໍ່ສົນດອກວ່າ ຂ້ອຍຈະເຮັດຜິດພາດ ຫຼາຍປານໃດ ເພາະພະເຈົ້າຍິ່ງໃຫຍ່ພໍ ທີ່ຈະພະຍຸງຂ້ອຍ ຂຶ້ນໃໝ່ແລະເຮັດໃຫ້ຂ້ອຍດຳເນີນຕໍ່ໄປໄດ້ພຣະອົງ

ຈະຊົງ ຊຳລະຄວາມຜິດຂອງຂ້ອຍຈົນໝົດ"

ຈະມີບັນຫາໃດຈະເຮັດໃຫ້ທ່ານພ່າຍແພ້ໄດ້ອີກ ຖ້າທ່ານຮູ້ແນ່ແທ້ວ່າພຣະເຈົ້າຊົງຮັກທ່ານ? ບໍ່ມີເລີຍທ່ານຈະມີໄຊຊະນະເໜືອບັນຫາທຸກຢ່າງ

ທ່ານຢາກຈະເປັນຜູ້ຊະນະແດ່ບໍ່? ຖ້າຢາກ ຂໍໃຫ້ຕອບຄຳຖາມນີ້ ມີເລື່ອງຫຍັງແນ່ໃນຊີວິດທີ່ທ່ານຕ້ອງການຈະເອົາຊະນະ? ນັ້ນຄືທາງດຽວທີ່ຈະເຮັດໃຫ້ທ່ານເຕີບໃຫຍ່ຂຶ້ນໄດ້ ຖ້າທ່ານບໍ່ມີບັນຫາຫຍັງເລີຍ ບໍ່ມີບັນຫາຫຍັງເລີຍ ບໍ່ມີເລື່ອງຫຍັງທີ່ຈະຕ້ອງເອົາຊະນະເລີຍ ແລ້ວທ່ານຈະໃຊ້ຄວາມເຊື່ອໃນເລື່ອງໃດລະ?

ຈົ່ງໃຊ້ບັນຫາໃນຊີວິດໃຫ້ເປັນໂອກາດທີ່ຈະເຮັດໃຫ້ທ່ານເຕີບໃຫຍ່ຂຶ້ນ ລໍຖ້າເບິ່ງວ່າພຣະເຈົ້າຈະເຮັດອອັນໃດເພື່ອທ່ານແດ່ ເພາະເຫດທີ່ພຣະອົງຊົງຮັກທ່ານ ພຣະອົງຊົງຮັກທ່ານ! ພຽງແຕ່ທ່ານຍອມເພິ່ງພາໃນພຣະເຈົ້າແລະຍອມໃຫ້ພຣະອົງຊົງຮັກທ່ານ ແລະທ່ານກໍຮັກພຣະອົງ ທ່ານກໍສາມາດຢຸດຄວາມພະຍາຍາມທີ່ຈະໃຊ້ຄວາມເຊື່ອແລະເຂົ້າສູ່ການພຳນັກພັກເຊົາໄດ້

ພຽງແຕ່ທ່ານຍອມໃຫ້ພຣະເຈົ້າຮັກທ່ານ ແລະທ່ານຮັກພຣະອົງ ແລ້ວທ່ານກໍຈະຍ່າງໄປຍ່າງມາຄືຄົນເມົາ ຄືເມົາໃນພຣະວິນຍານ ນັ້ນຄືຈຸດທີ່ບັນຫາໃນຊີວິດຂອງທ່ານຈະປົກຄຸມທ່ານບໍ່ໄດ້ອີກຕໍ່ໄປ ເພາະທ່ານດຳເນີນຊີວິດຢູ່ ໂດຍຄວາມຮັກ

ຂອງພຣະເຈົ້າ

ເມື່ອຂ້າພຣະເຈົ້າໄດ້ຮັບບັບຕິສະມາໃນພຣະວິນຍານບໍລິສຸດ ໃນອາທິດທຳອິດນັ້ນ ຂ້າພະເຈົ້າຮູ້ສຶກຄືກັບເມົາຢູ່ໃນຄວາມຮັກຂອງພຣະເຈົ້າ ຄົນພາກັນມາເວົ້າກັບຂ້າພຣະເຈົ້າວ່າ "ເຈົ້າເປັນຫຍັງແນວນີ້? ເຈົ້າບໍ່ຄືເກົ່າເລີຍໃດ່ຈອຍຊ໌ ຂ້ອຍບໍ່ຢາກເຊື່ອເລີຍ ເກີດຫຍັງຂຶ້ນກັບເຈົ້າ" ຄົນເຫຼົ່ານີ້ມາຫາຂ້າພຣະເຈົ້າອີກໃນໜຶ່ງອາທິດຕໍ່ມາ "ມີຫຍັງເກີດຂຶ້ນກັບຊີວິດຂອງເຈົ້າ?"

ຂ້າພະເຈົ້າບໍ່ຈຳເປັນຕ້ອງເວົ້າແມ່ນແຕ່ຄຳດຽວ ເພື່ອຈະຊັກຊວນ ໃຫ້ເຂົາເຊື່ອວ່າຊີວິດຂອງຂ້າພະເຈົ້າປ່ຽນໄປແລ້ວ ພວກເຂົາເຫັນໄດ້ຈະແຈ້ງຢູ່ແລ້ວ ຖ້າທ່ານດຳເນີນຊີວິດຢູ່ໃນຄວາມຮັກຂອງພຣະເຈົ້າ ທ່ານຈະຍິ້ມໄດ້ຕະຫຼອດເວລາ ທ່ານຈະເປັນຄົນສະຫງ່າງາມ ທ່ານຈະມີພະລັງເຂັ້ມແຂງ ທ່ານຈະສາມາດຊ່ວຍຄົນອື່ນໄດ້ ເພາະທ່ານຈະເຕັມລົ້ນໄປດ້ວຍໄຟຂອງອົງພຣະວິນຍານບໍລິສຸດຕະຫຼອດເວລາ ຈົນບັນຫາທຸກຢ່າຂອງທ່ານຈະໄດ້ຮັບການແກ້ໄຂ

ຈົ່ງເວົ້າກັບຕົນເອງວ່າ "ພຣະເຈົ້າຮັກຂ້ອຍ ຮາເລລູຢາ ພຣະເຈົ້າຮັກຂ້ອຍ ຂ້ອຍເປັນລູກຄົນພິເສດຂອງພຣະອົງ ພຣະເຈົ້າຮັກຂ້ອຍ" ຈາກນີ້ໄປໃຫ້ທ່ານກ້າວກະໂດດໃນຄວາມເຊື່ອ ແລະຂໍໃຫ້ເຊື່ອຕາມນັ້ນ

ພຣະເຈົ້າຮັກທ່ານຈິງແທ້!

# ກ່ຽວກັບຜູ້ຂຽນ

ຈອຍສ໌ ໄມເອີຣ໌ ເປັນຫນຶ່ງໃນອາຈານສອນພຣະຄຳພີຊັ້ນແນວຫນ້າຂອງໂລກເຊິ່ງມີຄຳສອນທີ່ນຳໄປປະຕິບັດຕາມໄດ້ ລາຍການ " ຊີວິດປຽ່ມສຸກ" ຂອງທ່ານອອກອາກາດເປັນປະຈຳທຸກວັນທາງໂທລະທັດແລະວິທະຍຸນັບຮ້ອຍສະຖານີທົ່ວໂລກ ນອກຈາກນີ້ ຈອຍຊ໌ ຍັງຂຽນຫນັງສືສ້າງແຮງບັນດານໃຈຫລາຍກວ່າຮ້ອຍເຫລັ້ມຫນັງສືທີ່ຕິດອັນດັບຂາຍດີໄດ້ແກ່ ຄວາມຄິດທີ່ຊີງພະລັງ, ວິທີຟັງພຣະສຸລະສຽງຂອງພຣະເຈົ້າ, ມາໄລແທນຂີ້ເຖົ່າ, ສະຫນາມຣົບໃນຄວາມຄິດ, The Confident Women, Look Great Feel Great, Starting Your Day Riht, Ending Your Day Riht, The Everyday Life Bible,

ຈອຍສ໌ ເດີນທາງໄປຈັດປະຊຸມຕາມທີ່ຕ່າງໆຫລາຍແຫ່ງຕະຫລອດປີ ທັງໃນອາເມຣິກາແລະທົ່ວໂລກ

## JOYCE MEYER MINISTRIES U.S. & FOREIGN OFFICE ADDRESSES

**Joyce Meyer Ministries**
P.O Box 655
Fenton, MO 632026
USA
(636) 349-0303

**Joyce Meyer Ministries - Cananda**
P.O Box 7700
Vancouver, BC V6B 4E2
Canada

**Joyce Meyer Ministries - Australia**
Locked Bag 77
Mansfield Delivery Centre
Queensland 4122
Australia
(07) 3349 1200

**Joyce Meyer Ministries - England**
P.O Box 1549
Windsor SL4 1GT
United Kingdom
01753 831102

**Joyce Meyer Ministries - South Africa**
P.O Box 5
Cape Town 800
South Africa
(27) 21-701-1056

## หนังสือ เขียนโดย จอยซ์ ไมเออร์ ที่พิมพ์เป็นภาษาไทยแล้ว

สนามรบในความคิด

กระบวนการสร้างผู้นำ

พระวจนะ พระนาม พระโลหิต

บอกเขาว่าเรารักเขา

การตัดสินใจครั้งสำคัญที่สุด

ชีวิตเปี่ยมสุข

ถ้าไม่ใช่เพราะพระคุณ

รากแห่งความขมขื่น

ทำไมพระเจ้าทำไม

สันติสุข

ความรักยิ่งใหญ่ที่สุด

มาลัยแทนขี้เถ้า

การปฏิวัติด้วยความรัก

ให้รางวัลตัวเอง ด้วยการยกโทษ

## OTHER BOOKS
## BY JOYCE MEYER

21 Ways to Finding Peace and Happiness

100 Ways to Simplify Your Life

Any Minute

Approval Addiction

The Approval Fix*

Battlefield of the Mind* (over three million copies sold)

Beauty for Ashes

Change Your Words, Change Your Life*

The Confident Mom*

The Confident Woman

Do Yourself a Favor… Forgive*

Eat the Cookie… Buy the Shoes*

The Everyday Life Bible

Get Your Hopes Up!*

Good Health, Good Life*

I Dare You

Living Beyond Your Feelings*

Living Courageously*

Look Great, Feel Great

The Love Revolution*

Making Good Habits, Breaking Bad Habits*

Never Give Up!

The Penny

Perfect Love (Previously published as God Is Not Mad at You)*

Power Thoughts*

The Power of Simple Prayer

Start Your New Life Today

# ພົບກັບຊີວິດໃໝ່

ຖ້າທ່ານຍັງບໍ່ເຄີຍອັນເຊີນອົງພຣະເຢຊູມາເປັນພຣະເຈົ້າ ແລະພຣະຜູ້ຊ່ວຍໃຫ້ພົ້ນຈາກບາບ ຂ້າພະເຈົ້າຢາກຈະຂໍເຊີນຊວນໃຫ້ທ່ານເຮັດເຊັ່ນນັ້ນ ທ່ານອະທິຖານຕາມຕົວຢ່າງດັ່ງຕໍ່ໄປນີ້ກະໄດ້ ແລະຖ້າທ່ານອະທິຖານຢ່າງຈິງໃຈ ທ່ານຈະໄດ້ພົບກັບຊີວິດໃໝ່ໃນພຣະຄຣິສ

ພຣະບິດາເຈົ້າຂ້າ ຂ້າພະເຈົ້າເຊື່ອວ່າພຣະເຢຊູຄຣິສຊົງເປັນພຣະບຸດຂອງພຣະອົງ ເປັນພຣະຜູ້ຊ່ວຍໃຫ້ພົ້ນຂອງໂລກ ຂ້າພະເຈົ້າເຊື່ອວ່າພະອົງສິ້ນພຣະຊົນເທິງກາງແຂນເພື່ອຮັບ ເອົາບາບແທນຂ້າພະເຈົ້າ ພຣະອົງຮັບໂທດບາບແທນຂ້າພະເຈົ້າແລ້ວ ຂ້າພະເຈົ້າເຊື່ອວ່າພຣະເຢຊູໄດ້ຄືນພຣະຊົນ ແລະຂະນະນີ້ຊົງປະທັບຢູ່ເບື້ອງຂວາພຣະຫັດຂອງພຣະເຈົ້າ ພຣະເຢຊູເຈົ້າ ຂ້າພຣະເຈົ້າຕ້ອງການພຣະອົງຂໍຊົງອະໄພບາບ ແລະຊ່ວຍຂ້າພະເຈົ້າໃຫ້ພົ້ນ ແລະໂຜດສະເດັດມາສະຖິດໃນຂ້າພະເຈົ້າ ຂ້າພະເຈົ້າຕ້ອງການທີ່ຈະບັງເກີດໃໝ

ຕອນນີ້ ຂໍໃຫ້ທ່ານເຊື່ອວ່າພຣະພຣະເຢຊູຄຣິສສະຖິດຢູ່ພາຍໃນໃຈຂອງທ່ານ ຄວາມບາບຂອງທ່ານໄດ້ຮັບການຍົກໂທດແລ້ວ ທ່ານເປັນຄົນຊອບທຳແລະຈະຢູ່ໃນສະຫວັນ

ຂໍໃຫ້ທ່ານຫາເບິ່ງຄຣິສຈັກທີ່ດີ ທີ່ສອນພຣະຄຳຂອງພຣະເຈົ້າ ແລ້ວເຂົ້າຮ່ວມປະຊຸມເປັນປະຈຳ ເພື່ອທ່ານຈະໄດ້ຈະເລີນຂຶ້ນໃນພຣະຄຣິສ ຊີວິດຂອງທ່ານຈະປ່ຽນແປງເລີຍຖ້າບໍ່ມີພຣະຄຳຂອງພຣະເຈົ້າ ພຣະທຳໂຢຮັນ 8:31-32 ກ່າວວ່າ "ຖ້າພວກທ່ານຕັ້ງໝັ້ນຢູ່ໃນຖ້ອຍຄຳຂອງເຮົາພວກທ່ານກໍເປັນສາວົກຂອງເຮົາຢ່າງແທ້ຈິງ ແລ້ວທ່ານຈະຮູ້ຈັກຄວາມຈິງແລະຄວາມຈິງນັ້ນຈະເຮັດໃຫ້ທ່ານເປັນອິດສະຫຼະ"

ຂໍໜູນໃຈໃຫ້ທ່ານຍຶດພຣະຄຳຂອງພຣະເຈົ້າໄວ້ສະສົມໄວ້ເລິກໆໃນຫົວໃຈ ເມື່ອທ່ານພິຈາລະນາເບິ່ງພຣະຄຳຂອງພຣະເຈົ້າແລ້ວ ທ່ານກໍຈະປ່ຽນໄປຄືກັບພຣະສາຍາຂອງພຣະເຢຊູຄຣິສຕາມທີ່ພຣະຄຳ 2ໂກລິນ 3:18 ໄດ້ກ່າວໄວ້

ຖ້າທ່ານໄດ້ຕ້ອນຮັບພຣະເຢຊູແລ້ວ ກະລຸນາຂຽນຈົດໝາຍເລົ່າໃຫ້ຂ້າພະເຈົ້າຟັງດ້ວຍ ທ່ານສາມາດຂໍໜັງສືແນະນຳວິທີເລີ່ມຕົ້ນຊີວິດໃໝ່ໄດ້ຟຣີ

ດ້ວຍຄວາມຮັກ

ຈອຍຊ໌